# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ກັນຍາ 2024
ປີທີ 13
ສະບັບທີ 985
ລາຍສັບປະດາ


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນສິງຫາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນສິງຫາ 2024 ໄດ້ດຳເນີນໃນວັນທີ 03-04 ກັນຍາຜ່ານມາ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ອ່ານຕໍ່ໜ້າ 8

## ສຳມະນາການເປັນປະທານກອງປະຊຸມໄອປາ ຄັ້ງທີ 45 ໃຫ້ການນຳສະພາແຫ່ງຊາດ



ອ່ານຕໍ່ໜ້າ 3

## ມອບວັດຖຸພັນ ໃຫ້ຫ້ອງມູນເຊື້ອ ແລະ ປະຫວັດສາດ



ອ່ານຕໍ່ໜ້າ 4

## ຍົກລະດັບທັກສະການບັນຊາ ກອງປະຊຸມສະພາ ແລະ ກອງປະຊຸມທົ່ວໄປ

(ສພຊ) - ກອງປະຊຸມເຝິກອົບຮົມທັກສະໃນການບັນຊາກອງປະຊຸມໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ10ແຂວງຄື: ຫົວພັນ, ຊຽງຂວາງ, ວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ, ເຊກອງ, ອັດຕະປື ແລະ ໄຊສົມບູນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ເຊິ່ງທ່ານປະທານກອງປະຊຸມໄດ້ມີຄຳເຫັນເນັ້ນໜັກເຖິງຈຸດປະ

ອ່ານຕໍ່ໜ້າ 3




## ປະກອບຄຳເຫັນໃສ່ຮ່າງມະຕິການກວດກາ ແລະ ຕ້ານການສໍ້ລາດບັງຫຼວງ, ວຽກງານສາຍດ່ວນ




ອ່ານຕໍ່ໜ້າ 8

## ພົທ. ສຸວອນ ເລືອງບຸນມີ ເຜີຍແຜ່ຜົນສຳເລັດ ກອງປະຊຸມສະໄໝສາມັນ ຢູ່ກະຊວງປ້ອງກັນປະເທດ ແລະ ກອງບັນຊາການທະຫານແຂວງ

(ສພຊ) - ວັນທີ 26 ສິງຫາ 2024 ທ່ານ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດພ້ອມດ້ວຍສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ຢູ່ກະຊວງປ້ອງກັນປະເທດ ໂດຍການຕ້ອນຮັບຂອງທ່ານ ພົຕ. ປະສິດ ທ່ຽງທຳ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ເຕັກນິກກອງທັບ ພ້ອມດ້ວຍນາຍ ແລະ ພົນທະຫານ ເຂົ້າຮ່ວມຢ່າງຫຼວງຫຼາຍ ແລະ ວັນທີ 27 ສິງຫາ ໄດ້ໄປເຜີຍແຜ່ຢູ່ກອງບັນຊາການທະຫານແຂວງວຽງຈັນ ເຊິ່ງມີທ່ານ ພົຈວ. ບຸນຜອງ ບຸດທະວົງ ຫົວໜ້າການເມືອງກອງບັນຊາການທະຫານແຂວງ ພ້ອມດ້ວຍນາຍ ແລະ ພົນທະຫານ-ຕຳຫຼວດແຂວງວຽງຈັນ ເຂົ້າຮ່ວມຢ່າງພ້ອມພຽງ.



ໃນການເຜີຍແຜ່ຢູ່ທັງ 2

ອ່ານຕໍ່ໜ້າ 8

## ເຝິກອົບຮົມວຽກງານສື່ມວນຊົນໃຫ້ພະນັກງານສະພາ



(ສພຊ) - ກົມສື່ມວນຊົນ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມເຝິກອົບຮົມວຽກງານສື່ມວນຊົນ ພາຍໃຕ້ຫົວຂໍ້: "ບົດຮຽນຂຽນຂ່າວການຕອບໂຕ້ຖ້ອຍທຳນອງບິດເບືອນຂອງຄົນບໍ່ດີໃນສື່ອອນລາຍ, ການບັນນາທິການທາງດ້ານເນື້ອໃນແລະເຕັກນິກການຖ່າຍພາບນິ້ງ-ວີດີໂອ" ໃຫ້ແກ່ພະນັກງານສື່ມວນຊົນຂອງສະພາແຫ່ງຊາດ (ສພຊ) ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ທົ່ວປະເທດ ໂດຍການເປັນປະທານ

ອ່ານຕໍ່ໜ້າ 4



ຊອກຮູ້ຄອງ 14 (ໜ້າ 9)



ປະທານາທິບໍດີ... (ໜ້າ 11)

ເຝົ້າເບິ່ງ ໄດ້ຍິນ ❖ ວິເຄາະ ສະແດງຄວາມຄິດເຫັນ

ກິດໝາຍຊ່ວຍເຫຼືອ... (ໜ້າ 12)

ຊົມເຊີຍວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 22 ປີ (9 ກັນຍາ 2002 - 9 ກັນຍາ 2024) ຢ່າງສຸດໃຈ!

# ຍົກສູງຄຸນນະພາບການຕິດຕາມກວດກາການເຄື່ອນໄຫວວຽກງານຂອງ ສພຊ



(ສພຊ) - ກອງປະຊຸມສຳມະນາຍົກສູງຄຸນນະພາບການຕິດຕາມກວດກາຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນວັນທີ 28-29 ສິງຫາ 2024 ທີ່ເມືອງປາກຊັນ ແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ຄຳຈັນ ໂສຕາປະເສີດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການບັນດາເຜົ່າ (ກບຜ) ເຊິ່ງມີບັນດາທ່ານວິທະຍາກອນທີ່ເປັນການນຳຂັ້ນສູງຂອງ ສພຊ ແລະ ສູນກາງແນວລາວສ້າງຊາດ (ສນຊ) ພ້ອມດ້ວຍສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກບຜ ຈາກ 10 ເຂດເລືອກຕັ້ງພາກກາງ ແລະ ພາກໃຕ້, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດ, ປະທານແນວລາວສ້າງຊາດແຂວງບໍລິຄຳໄຊ, ຕາງໜ້າ ສນຊ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 70 ທ່ານ.

ທ່ານ ຄຳຈັນ ໂສຕາປະເສີດ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມສຳມະນາຄັ້ງນີ້ ມີຈຸດປະສົງເພື່ອທົບທວນຄືນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ໃນການຕິດຕາມກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ເພື່ອຍົກສູງຄຸນນະພາບໃນການເຄື່ອນໄຫວວຽກງານຕາມ 3 ພາລະບົດບາດຂອງສະພາແຫ່ງຊາດ.

ໃນກອງປະຊຸມ ໄດ້ຮັບຟັງການສະເໜີບາງບົດຮຽນໃນການປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດຕາງໜ້າອົງການຈັດຕັ້ງມະຫາຊົນຕໍ່ກອງປະຊຸມສະໄໝສາມັນທ້າຍປີຂອງສະພາແຫ່ງຊາດ; ການຈັດຕັ້ງປະຕິບັດມະຕິຕົກລົງ ສະບັບເລກທີ 01/ຄປຈ, ລົງວັນທີ 22/5/2019 ວ່າດ້ວຍການພົວພັນລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ຄະນະປະຈຳສູນກາງແນວລາວສ້າງຊາດ ແລະ ຕີລາຄາຄຸນນະພາບດ້ານເນື້ອໃນຂອງຮ່າງບົດປະກອບຄຳເຫັນຜົນການຕິດຕາມກວດກາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດທີ່ສູນກາງແນວລາວສ້າງຊາດຕາງໜ້າອົງການຈັດຕັ້ງມະຫາຊົນສະເໜີຕໍ່ກອງປະຊຸມສະໄໝສາມັນທ້າຍປີຂອງສະພາແຫ່ງຊາດໄລຍະຜ່ານມາ; ຕີລາຄາການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງສູນກາງແນວລາວສ້າງຊາດ ຕໍ່ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດໄລຍະຜ່ານມາ; ການຕິດຕາມກວດກາຂອງສູນກາງແນວລາວສ້າງຊາດ ຕໍ່ການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ຕໍ່ສູນກາງແນວລາວສ້າງຊາດແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໂດຍຍົກໃຫ້ເຫັນຄວາມແຕກຕ່າງຂອງການຕິດຕາມກວດກາເຊິ່ງກັນແລະກັນຂອງທັງສອງຝ່າຍ; ບາງທັດສະນະເພື່ອຍົກສູງຄຸນນະພາບເນື້ອໃນດ້ານການປະກອບຄຳເຫັນຂອງສູນກາງແນວລາວສ້າງຊາດຕາງໜ້າອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຕໍ່ກອງປະຊຸມສະໄໝສາມັນທ້າຍປີຂອງສະພາແຫ່ງຊາດ. ບັນດາທ່ານຜູ້ແທນກອງປະຊຸມ ກໍໄດ້ປະກອບຄຳເຫັນ, ສົນທະນາ ແລະ ແລກປ່ຽນບົດຮຽນຕໍ່ຫົວຂໍ້ຕ່າງໆດ້ວຍຄວາມຈິງໃຈ ແລະ ກົງໄປກົງມາ.

ກອງປະຊຸມຄັ້ງນີ້ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

# ກຳມາທິການການຕ່າງປະເທດ ຕິດຕາມກວດກາການປະຕິບັດກົດໝາຍຂົງເຂດວຽກງານການຕ່າງປະເທດຢູ່ຫຼວງນ້ຳທາ



(ສພຊ) - ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດວຽກງານການຕ່າງປະເທດໃນລະຫວ່າງວັນທີ 15-16 ສິງຫາ 2024 ກຳມາທິການການຕ່າງປະເທດສະພາແຫ່ງຊາດ ນຳໂດຍ ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດພ້ອມດ້ວຍຄະນະໄດ້ເຄື່ອນໄຫວວຽກງານຢູ່ ແຂວງຫຼວງນ້ຳທາ; ໃນໂອກາດນີ້ ຄະນະໄດ້ເຂົ້າຢ້ຽມຂໍ່ານັບການນຳແຂວງ ແລະ ເປີດກອງປະຊຸມຮ່ວມສະພາປະຊາຊົນແຂວງ, ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ.

ຈຸດປະສົງຂອງການລົງເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນແລະກົດໝາຍໃນຂົງເຂດວຽກງານການຕ່າງປະເທດ ກໍຄືການຕິດຕາມການຈັດຕັ້ງປະຕິບັດ ບັນດາສົນທິສັນຍາ ແລະ ສົນຍາສາກົນ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນພາຄີ ເປັນຕົ້ນ, ການຄຸ້ມຄອງດ່ານສາກົນ, ການຄຸ້ມຄອງຄົນເຂົ້າ-ອອກເມືອງ, ບັນຫາການຄ້າມະນຸດ, ການແຕ່ງງານທີ່ບໍ່ຖືກຕ້ອງຕາມກົດໝາຍ, ພ້ອມທັງຊຸກຍູ້ການຕິດຕາມກວດກາການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂຄງການຊ່ວຍເຫຼືອລ້າ (ODA), ການລົງທຶນຂອງຕ່າງປະເທດ, ອົງການທີ່ບໍ່ແມ່ນລັດຖະບານ (NGOs) ແລະອື່ນໆ ຢູ່ ສປປ ລາວ; ພ້ອມທັງເກັບກຳບັນຫາທີ່ພົ້ນເດັ່ນກ່ຽວກັບວຽກງານຂົງເຂດການຕ່າງປະເທດຢູ່ທ້ອງຖິ່ນ ເພື່ອລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ.

ໃນກອງປະຊຸມໄດ້ຮັບຟັງການລາຍງານຫຍໍ້ຈາກບັນດາພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງກ່ຽວກັບວຽກງານການຕ່າງປະເທດ; ພ້ອມດຽວກັນນັ້ນ, ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ເນັ້ນໜັກໃຫ້ເອົາໃຈໃສ່ຕື່ມບາງບັນຫາເຊັ່ນ: ການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນການປະຕິບັດວຽກງານໃນຂົງເຂດຕ່າງປະເທດ, ການຄຸ້ມຄອງໂຄງການລົງທຶນຂອງຕ່າງປະເທດ ເປັນຕົ້ນການແກ້ໄຂບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ ແລະ ການຄຸ້ມຄອງຄົນເຂົ້າ-ອອກເມືອງ, ການຄຸ້ມຄອງຄົນຕ່າງດ້າວແລະບັນຫາອື່ນໆ ທີ່ສົ່ງຜົນກະທົບເຖິງຊີວິດການເປັນຢູ່ຂອງປະຊາຊົນ. ຕອນແລງຂອງວັນດຽວກັນ ຄະນະຍັງໄດ້ລົງເຄື່ອນໄຫວເຮັດວຽກຮ່ວມກັບຄະນະຄຸ້ມຄອງດ່ານສາກົນບໍ່ເຕ່ນ ແລະ ຄະນະຄຸ້ມຄອງເຂດເສດຖະກິດແຂວງຫລວງນ້ຳທາ ເພື່ອຮັບຟັງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາທີ່ພົ້ນເດັ່ນໃນວຽກງານຕ່າງປະເທດ.

# ກອງປະຊຸມໃຫຍ່ ຄັ້ງທີ I ໜ່ວຍແມ່ຍິງຮາກຖານ ສນສ



(ສພຊ) - ກອງປະຊຸມໃຫຍ່ ຄັ້ງທີ I ຂອງໜ່ວຍແມ່ຍິງຮາກຖານສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ໄດ້ເປີດຂຶ້ນ ແລະ ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ ໃນຕອນບ່າຍວັນສຸກທີ 30 ສິງຫາຜ່ານມາ ໂດຍການເປັນປະທານຮ່ວມຂອງສະຫາຍ ຄຳແທ່ນ ວິລະກຸນ ຄະນະໜ່ວຍພັກຮາກຖານສະຖາບັນຄົ້ນຄວ້ານິຕິກຳ, ສະຫາຍນາງ ຄຳຫຼ້າ ສິດທະຈອນ ຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ, ສະຫາຍ ນາງ ພິດສະໄໝ ວົງພະນະຄອນ ຫົວໜ້າໜ່ວຍແມ່ຍິງຮາກຖານສະຖາບັນຄົ້ນຄວ້ານິຕິກຳ; ເຂົ້າຮ່ວມມີບັນດາໜ່ວຍແມ່ຍິງອ້ອມຂ້າງສະພາແຫ່ງຊາດພ້ອມດ້ວຍອົງການຈັດຕັ້ງມະຫາຊົນ ແລະ ສະມາຊິກໜ່ວຍແມ່ຍິງຮາກຖານສະຖາບັນດັ່ງກ່າວ.

ກອງປະຊຸມໃຫຍ່ ໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ, ທິດທາງຄາດໝາຍສູ້ຊົນແຕ່ລະດ້ານ ແລະ ບົດສຳຫຼວດການນຳພາລວມຂອງໜ່ວຍແມ່ຍິງຮາກຖານສະຖາບັນຄົ້ນຄວ້ານິຕິກຳຊຸດເກົ່າ ເຊິ່ງໄດ້ຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ແລະ ບາງບົດຮຽນທີ່ຖອດຖອນໄດ້ ໃນການນຳພາ-ຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ (2018-2024) ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານຂອງຄະນະໜ່ວຍແມ່ຍິງຮາກຖານຊຸດໃໝ່ ດີຂຶ້ນກວ່າເກົ່າ; ພ້ອມນີ້, ຍັງໄດ້ຮັບຮອງເອົາທິດທາງແຜນການນັບແຕ່ປີ 2024-2030 ແລະ ມາດຕະການຈັດຕັ້ງປະຕິບັດໃນຕໍ່ໜ້າ.

ຜູ້ແທນກອງປະຊຸມ ໄດ້ພ້ອມກັນໃຊ້ສິດປະຊາທິປະໄຕປ່ອນບັດຄັດເລືອກເອົາຄະນະໜ່ວຍແມ່ຍິງຮາກຖານຊຸດໃໝ່ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ທັງຖືກຕ້ອງສອດຄ່ອງກັບມາດຕະຖານແລະເງື່ອນໄຂທີ່ກຳນົດໄວ້ ເຊິ່ງມີຜູ້ອອກສະໝັກ 5 ສະຫາຍ, ເລືອກເອົາ 3 ສະຫາຍ; ກອງປະຊຸມຄັ້ງປະຖົມມະລຶກຂອງໜ່ວຍແມ່ຍິງຮາກຖານສະຖາບັນຄົ້ນຄວ້ານິຕິກຳສະໄໝທີ I ໄດ້ເປັນເອກະພາບເລືອກເອົາສະຫາຍ ນາງ ດຸກຕາ ວັນອາລຸນສະຫວັດເປັນຫົວໜ້າ, ສະຫາຍນາງດວງພອນວົງທະສິດເປັນຮອງຫົວໜ້າ, ສະຫາຍ ນາງ ຫວ່າງທໍ່ ເຢຍປາວເຮີ ເປັນຄະນະ.

ສະຫາຍ ຄຳແທ່ນ ວິລະກຸນ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນງານການເຄື່ອນໄຫວ ແລະ ການສ້າງຂະບວນການຕ່າງໆທີ່ບັນດາສະຫາຍສະມາຊິກແມ່ຍິງ ໄດ້ຕັ້ງໜ້າປະກອບສ່ວນເຂົ້າໃນການປະຕິບັດໜ້າທີ່ວຽກງານໃນໄລຍະຜ່ານມາ ພ້ອມທັງເນັ້ນໜັກໃຫ້ສືບຕໍ່ເອົາໃຈໃສ່ປະຕິບັດພາລະບົດບາດຂອງຕົນທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງສະຫະພັນແມ່ຍິງລາວ; ນຳພາສຶກສາອົບຮົມວຽກງານການເມືອງ-ແນວຄິດ ແກ່ສະມາຊິກແມ່ຍິງໃຫ້ເລິກເຊິ່ງ ດ້ວຍຫຼາຍວິທີ ໃຫ້ມີຄຸນສົມບັດສົມທຳປະຕິວັດ, ມີຄວາມອ່ອນນ້ອມຖ່ອມຕົນ, ເຄົາລົບ ແລະ ໃຫ້ກຽດເຊິ່ງກັນແລະກັນ, ຮັກສາກຽດສັກສີ ແລະ ວັດທະນະທຳທີ່ເປັນເອກະລັກຂອງແມ່ຍິງລາວ; ເສີມຂະຫຍາຍທ່າແຮງຄວາມຮູ້ຄວາມສາມາດ ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ; ຊຸກຍູ້ ແລະ ສ້າງເງື່ອນໄຂໃນການສຶກສາຄົ້ນຄວ້າ, ສະແຫວງຫາຄວາມກ້າວໜ້າ, ຊອກຮູ້ຮ່ຳຮຽນເອົາສິ່ງໃໝ່ໆ, ມີຫົວຄິດປະດິດສ້າງ, ມີຄວາມສະດຸ້ງໄວ, ດຸໝັ່ນຫ້າວຫັນ; ປະສານສົມທົບກັບຄະນະໜ່ວຍພັກຮາກຖານ ສ້າງພະນັກງານເພດຍິງໃຫ້ມີຄວາມເຂັ້ມແຂງ, ກ້າວໜ້າໃນທຸກດ້ານ ເພື່ອໃຫ້ສະມາຊິກແມ່ຍິງມີມາດຕະຖານຄົບຖ້ວນໄດ້ບັນຈຸສັບ ຊ້ອນເຂົ້າໃນຕຳແໜ່ງພະນັກງານນຳພາ-ຄຸ້ມຄອງໃຫ້ຫຼາຍຂຶ້ນ.

**(ນາງ ໄຊໂສພາພອນ ມົ່ງມຸງຄຸນ)**



## ສຳມະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ໃນວັນທີ 27-28 ສິງຫາ 2024 ທີ່ສະພາແຫ່ງຊາດ ໄດ້ມີການຈັດກອງປະຊຸມສຳມະນາກ່ຽວກັບການເປັນປະທານກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໃຫ້ແກ່ການນຳຂອງສະພາແຫ່ງຊາດ, ບັນດາສະມາຊິກສະພາແຫ່ງຊາດທີ່ກ່ຽວຂ້ອງ ໂດຍການເປັນປະທານຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແລະ ທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈີ ອັບດຸນຣາມັນ (Siti Rozaimeriyanty Dato Haji Abdul Rahman) ເລຂາທິການໃຫຍ່ໄອປາ; ມີບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດທີ່ຈະເປັນປະທານກອງປະຊຸມປິ່ນອ້ອມໄອປາ, ສະມາຊິກສະພາແຫ່ງຊາດທີ່ສັງກັດໃນແຕ່ລະອະນຸກຳມະການ. ໃນກອງປະຊຸມສຳມະນາຄັ້ງນີ້ໄດ້ມີການເຊື້ອເຊີນເອົາບັນດາຊ່ຽວຊານທີ່ປຶກສາທີ່ມາຈາກປະເທດຫວຽດນາມ, ໄທ, ຟີລິບປິນ, ອິນໂດເນເຊຍ ແລະກອງເລຂາໄອປາພ້ອມດ້ວຍອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳຂອງສະພາແຫ່ງຊາດ ໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ45 ໂດຍສະເພາະແມ່ນການເປັນປະທານກອງປະຊຸມ, ການຄວບຄຸມ ແລະ ບັນຊາກອງປະຊຸມ, ການປະກອບຄຳເຫັນຕໍ່ກອງປະຊຸມ, ທັກສະໃນການເຈລະຈາ, ກົນໄກການພິຈາລະນາຕົກລົງບັນຫາຂອງໄອປາ ທັງເປັນການສະໜອງຂໍ້ມູນກ່ຽວກັບອົງການ, ບົດບາດ ແລະ ກົນໄກການດຳເນີນງານຂອງໄອປາ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ມີຄຳເຫັນເນັ້ນໜັກເຖິງຄວາມສຳຄັນຂອງກອງປະຊຸມສຳມະນາຄັ້ງນີ້ ເຊິ່ງຈະເປັນໂອກາດທີ່ດີໃຫ້ແກ່ບັນດາທ່ານການນຳຂອງສະພາແຫ່ງຊາດລາວ ໄດ້ແລກປ່ຽນປະສົບການ, ຖອດຖອນບົດຮຽນນຳຊ່ຽວຊານມາຈາກຫຼາຍປະເທດທີ່ມີປະສົບການຕົວຈິງ ເພື່ອນຳໃຊ້ເຂົ້າໃນການເປັນປະທານກອງປະຊຸມໃນຕໍ່ໜ້າ ໂດຍສະເພາະແມ່ນບັນດາໜ້າວຽກທີ່ຈະໄດ້ກະກຽມຄວາມພ້ອມໃຫ້ແກ່ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45.

ໃນກອງປະຊຸມດັ່ງກ່າວ ມີການຮັບຟັງ ແລະ ສົນທະນາບັນຫາສຳຄັນຄື: 1) ແລກປ່ຽນປະສົບການກ່ຽວກັບການທູດລັດຖະສະພາໃນລະດັບພາກພື້ນ ແລະ ສາກົນ - ວິທີການເພື່ອບັນລຸຜົນສຳເລັດ; 2) ໜ້າວຽກທີ່ສຳຄັນຂອງກອງປະຊຸມໃຫຍ່ໄອປາຄັ້ງທີ 45: ວາລະ, ລະບຽບ ແລະ ຂັ້ນຕອນ, ການປະຕິບັດຕົວຈິງ; 3) ຄວາມເຂົ້າໃຈກ່ຽວກັບການຮ່າງມະຕິ ແລະ ການນຳສະເໜີມະຕິໃນກອງປະຊຸມໄອປາ: ລົງເລິກດ້ານເນື້ອໃນ ແລະ ບັນຫາລະອຽດອ່ອນ; 4) ການເປັນປະທານກອງປະຊຸມຄະນະບໍລິຫານງານ ແລະ ກອງປະຊຸມຄະນະກຳມາທິການປະຈຳຕ່າງໆຂອງໄອປາ: ປະສົບການ, ການປະຕິບັດທີ່ດີ ແລະ ທັກສະທີ່ຈຳເປັນ; 5) ການເຊື່ອມໂຍງບົດບາດຍິງຊາຍເຂົ້າໃນການທູດລັດຖະສະພາ (ໂດຍສະເພາະໃນກອງປະຊຸມ WAIPA) ແລະ ບັນຫາທີ່ກ່ຽວຂ້ອງຈຳນວນໜຶ່ງ.

**(ນາງ ກຸກກິກ ບຸດດາໄຊ)**

# ສ້າງຄວາມເຂັ້ມແຂງວຽກງານການເງິນ



(ສພຊ) - ໃນວັນທີ 31 ສິງຫາ-01 ກັນຍາ 2024 ກົມການເງິນ, ຄະນະເລຂາທິການສະພາແຫ່ງຊາດ ໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງດ້ານວິຊາການວຽກງານການເງິນກ່ຽວກັບລະບຽບການເງິນຂອງລັດ ແລະ ອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງສະພາແຫ່ງຊາດ (ສພຊ) ໃຫ້ແກ່ຜູ້ປະສານງານໂຄງການສະພາປະຊາຊົນຂັ້ນແຂວງ (ສພຂ) ພາຍໃຕ້ການເປັນປະທານຂອງທ່ານ ສີຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ; ມີບັນດາທ່ານຄະນະເລຂາທິການສະພາປະຊາຊົນຂັ້ນແຂວງ (ຜູ້ຊີ້ນຳຄະນະປະສານງານ), ພະນັກງານທີ່ຮັບຜິດຊອບວຽກງານການເງິນ ແລະ ວຽກງານໂຄງການ (ຜູ້ປະສານງານຂອງ ສພຂ), ຜູ້ຕາງໜ້າອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງ ສພຊ, ວິທະຍາກອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກວ່າ 80 ທ່ານ.

ທ່ານ ສີຄຳ ວົງພະຈັນ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ເຊິ່ງມີບາງຕອນວ່າ: ວຽກງານການເງິນ ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະເປັນປັດໄຈຕົ້ນຕໍໃນການຂັບເຄື່ອນໃຫ້ບັນດາແຜນການ, ແຜນງານຂອງສະພາແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຜົນສຳເລັດເປັນຢ່າງດີຕະຫຼອດມາ; ດັ່ງນັ້ນ, ຈຸດປະສົງຂອງກອງປະຊຸມທີ່ມີຄວາມສຳຄັນດັ່ງກ່າວນີ້ແມ່ນເພື່ອເປັນການຍົກສູງພາລະບົດບາດການເປັນເສນາທິການທີ່ດີ, ມີຄຸນນະພາບ ໃຫ້ແກ່ຄະນະນຳຂອງສະພາແຫ່ງຊາດໃນວຽກງານການເງິນ ຮັບປະກັນການປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງກັບລະບຽບຫຼັກການ ເປັນຕົ້ນ ການຄຸ້ມຄອງນຳໃຊ້ງົບປະມານລວມຂອງລັດ, ການນຳໃຊ້ງົບປະມານຂອງອົງການຈັດຕັ້ງສາກົນ, ແຫຼ່ງທຶນຊ່ວຍເຫຼືອລ້າ ຂອງສະພາແຫ່ງຊາດລວມໄປເຖິງຂັ້ນຕອນການປະສານງານລະຫວ່າງຜູ້ປະສານງານຂອງສະພາປະຊາຊົນຂັ້ນແຂວງ ແລະກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການເຜີຍແຜ່ຄຳແນະນຳວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ສະບັບເລກທີ 3797/ກງ, ລົງວັນທີ 24 ພະຈິກ 2023; ຂໍ້ຕົກລົງຂອງກະຊວງການເງິນວ່າດ້ວຍການກຳນົດໝາຍການໃຊ້ຈ່າຍງົບປະມານລັດ, ການປະຢັດແລະຕ້ານການຟຸມເຟືອຍ ສະບັບເລກທີ 200/ກງ, ລົງວັນທີ 25 ມັງກອນ 2023; ຄຳແນະນຳກ່ຽວກັບການປະກອບເອກະສານ ແລະ ກວດກາເອກະສານລາຍຈ່າຍງົບປະມານແຫ່ງລັດ ແລະທຶນການຊ່ວຍເຫຼືອທາງການເພື່ອການພັດທະນາ ຢູ່ຄັງເງິນແຫ່ງຊາດ ສະບັບເລກທີ 0866/ກງ, ລົງວັນທີ 22 ມີນາ 2019; ພາບລວມຂອງການສະໜັບສະໜູນສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ພາລະບົດບາດ ແລະ ໜ້າທີ່ຂອງພະແນກຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ (ກົມການເງິນ); ຂັ້ນຕອນການປະສານງານ, ການສ້າງແຜນກິດຈະກຳປະຈຳປີ, ແຜນກິດຈະກຳ, ການປະກອບເອກະສານ ເພື່ອຂໍນຳໃຊ້ງົບປະມານຊ່ວຍເຫຼືອລ້າ ແລະ ການສະຫຼຸບລາຍງານດ້ານເນື້ອໃນ; ແນະນຳລະບຽບການນຳໃຊ້ງົບປະມານຈາກອົງການຈັດຕັ້ງສາກົນທີ່ເປັນຄູ່ຮ່ວມງານຂອງສະພາແຫ່ງຊາດ ແລະສະພາປະຊາຊົນຂັ້ນແຂວງ; ແນະນຳການສະໜອງເອກະສານຜ່ານ Google Drive ແລະສ້າງຟອມປະເມີນຜ່ານ Google Form; ແນະນຳກ່ຽວກັບການປະເມີນ ແລະການລາຍງານກິດຈະກຳ (MEL).

ກອງປະຊຸມຄັ້ງນີ້ ຈັດຂຶ້ນທີ່ເມືອງວັງວຽງ ແຂວງວຽງຈັນ ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**



## ຍົກລະດັບ...

(ຕໍ່ຈາກໜ້າ 1)

ສິ່ງຕົ້ນຕໍຂອງການເຝິກອົບຮົມຄັ້ງນີ້ ແມ່ນເພື່ອບຳລຸງຍົກລະດັບທັກສະການບັນຊາກອງປະຊຸມໃຫ້ແກ່ພະນັກງານນຳພາ-ຄຸ້ມຄອງຂັ້ນສູງຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເຊິ່ງເປັນໂອກາດດີທີ່ໄດ້ແລກປ່ຽນຄວາມເຫັນ, ຖອດຖອນບົດຮຽນແລະປະສົບການເຊິ່ງກັນແລະກັນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງໃນປັດຈຸບັນແລະຕໍ່ໜ້າ.

ບັນດາການນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຫຼາຍກວ່າ 30 ທ່ານ ໄດ້ຮັບຟັງການສະເໜີ 2 ຫົວຂໍ້ຄື: ທັກສະໃນການບັນຊາກອງປະຊຸມຕາມພາລະບົດບາດຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ສະເໜີໂດຍທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ແລະ ການບັນຊາກອງປະຊຸມທົ່ວໄປ ສະເໜີໂດຍທ່ານ ສີພຸກ ວົງພັກດີ ອະດີດຮອງລັດຖະມົນຕີກະຊວງພາຍໃນ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຄຳຄິດຄຳເຫັນນຳກັນຢ່າງກົງໄປກົງມາ, ຟົດຟື້ນ, ມີການຍົກເອົາບົດຮຽນໃນການບັນຊາກອງປະຊຸມຢູ່ໃນເຂດເລືອກຕັ້ງຕ່າງໆ ມາແລກປ່ຽນນຳກັນ ອັນເຮັດໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ສາມາດຮຽນຮູ້ດ້ານປະສົບການຕົວຈິງຫຼາຍຂຶ້ນ, ເປັນການສ້າງຄວາມເຂັ້ມແຂງແກ່ການນຳຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ.

ກອງປະຊຸມດັ່ງກ່າວ ຈັດຂຶ້ນໃນວັນທີ2-3ກັນຍາ2024 ທີ່ແຂວງບໍລິຄຳໄຊ ເຊິ່ງໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**



## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ຂອງທ່ານນາງອຳໄພວອນລ້ອມບຸນແພງກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເຊິ່ງມີທ່ານ ສົງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານສື່ມວນຊົນ ພ້ອມດ້ວຍສຳມະນາກອນທີ່ເປັນພະນັກງານຜູ້ຮັບຜິດຊອບວຽກງານສື່ມວນຊົນຂອງ ສພຊ ແລະ ສພຂ, ຕາງໜ້າຈາກວິທະຍຸກະຈາຍສຽງແຫ່ງຊາດລາວ ແລະ ໂທລະພາບແຫ່ງຊາດລາວ, ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍກວ່າ 60 ທ່ານ.

ກອງປະຊຸມດັ່ງກ່າວມີຈຸດປະສົງເພື່ອຍົກລະດັບບຸຄະລາກອນທີ່ຮັບຜິດຊອບວຽກງານສື່ມວນຊົນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມຮູ້ຄວາມເຂົ້າໃຈຢ່າງຖືກຕ້ອງກ່ຽວກັບການໂຄສະນາເຜີຍແຜ່ພາລະບົດບາດ ແລະ ການເຄື່ອນໄຫວ, ຜົນສຳເລັດກອງປະຊຸມຕ່າງໆຂອງ ສພຊ ແລະ ສພຂ, ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກ ແລະ ສື່ອອນລາຍ ໃຫ້ມີເນື້ອໃນເລິກເຊິ່ງ, ຫຼາກຫຼາຍສີສັນ ແລະ ກວ້າງຂວາງ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ກົດໝາຍຂອງລັດ ທັງເປັນການປັບປຸງການສ້າງເຄືອຂ່າຍການສະໜອງຂໍ້ມູນຂ່າວສານຂອງສະພາປະຊາຊົນຂັ້ນແຂວງ (ທ້ອງຖິ່ນ) ໃຫ້ກັບໜັງສືພິມ, ລາຍການວິທະຍຸ ແລະ ໂທລະພາບ ຜູ້ແທນປະຊາຊົນ ຂອງສະພາແຫ່ງຊາດ ຢ່າງປົກກະຕິ; ພ້ອມກັນນັ້ນ, ກໍເປັນການເພີ່ມຂີດຄວາມຮູ້ຄວາມສາມາດ, ຄວາມຊຳນານໃນການຂຽນຂ່າວແບບມືອາຊີບ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ໄດ້ມີຄຳເຫັນກ່າວເປີດກອງປະຊຸມ ເຊິ່ງມີບາງຕອນວ່າ: ການຈັດເຝິກອົບຮົມໃນຄັ້ງນີ້ ເປັນການສ້າງເງື່ອນໄຂໃຫ້ແກ່ສຳມະນາກອນໄດ້ມີໂອກາດແລກປ່ຽນບົດຮຽນນຳບັນດາວິທະຍາກອນ ໂດຍມີການສົມທຽບບົດຮຽນແລະການປະຕິບັດວຽກງານຕົວຈິງ ລະຫວ່າງສູນກາງ-ທ້ອງຖິ່ນຢ່າງກົງໄປກົງມາ ໃນຖານະເປັນເສນາທິການດ້ານສື່ມວນຊົນໃຫ້ແກ່ສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງ ເພື່ອນຳເອົາບົດຮຽນໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານຕົວຈິງ ໃຫ້ສອດຄ່ອງກັບສະພາບຈຸດພິເສດຂອງແຕ່ລະພາກສ່ວນ ໃຫ້ນັບມື້ດີຂຶ້ນເປັນກ້າວໆ.

ກອງປະຊຸມທີ່ຈັດຂຶ້ນໃນວັນທີ 29 ສິງຫາ-01 ກັນຍາ 2024 ຜູ້ເຂົ້າຮ່ວມໄດ້ຮັບຟັງບົດຮຽນຂຽນຂ່າວການຕອບໂຕ້ຖ້ອຍທຳນອງບິດເບືອນຂອງຄົນບໍ່ດີໃນສື່ອອນລາຍ ສະເໜີໂດຍທ່ານ ຄຳວິສັນ ແກ້ວສຸວັນ ຊ່ຽວຊານ ທີ່ປຶກສາວຽກງານສື່ມວນຊົນສະພາແຫ່ງຊາດ, ການບັນນາທິການທາງດ້ານເນື້ອໃນ ຈາກທ່ານ ສຸວັນ ວິໄລແສງ ຜູ້ອຳນວຍການວິທະຍຸກະຈາຍສຽງແຫ່ງຊາດລາວ, ເຕັກນິກການຖ່າຍພາບນິ້ງ-ວີດີໂອ ຈາກທ່ານ ປານຕະນະ ສຸກສະຫວັດດີ ຊ່ຽວຊານດ້ານການຜະລິດສື່ວີດີໂອ ເພື່ອການພັດທະນາ; ຈາກນັ້ນ, ກໍໄດ້ມີການສົນທະນາຖາມ-ຕອບເພື່ອແລກປ່ຽນບົດຮຽນເຊິ່ງກັນແລະກັນ ແລະ ເຝິກຫັດການປະຕິບັດຕົວຈິງ.

ກອງປະຊຸມຄັ້ງນີ້ ຈັດຂຶ້ນທີ່ເມືອງວັງວຽງ ແຂວງວຽງຈັນ, ໄດ້ຮັບການສະໜັບສະໜູນຊ່ວຍຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ນາງ ອາລິນ ສຸພົມມະປະກິດ)**

# ທົດລອງນຳໃຊ້ຄູ່ມືຕິດຕາມກວດກາການປະເມີນຜົນການປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ



(ສພຊ)-ເພື່ອສ້າງຄວາມເຂົ້າໃຈແລະເປັນເອກະພາບໃນການນຳໃຊ້ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຂອງລັດຖະກອນສະພາປະຊາຊົນແຂວງ(ສພຂ)ຄຳມ່ວນທັງເປັນການກວດກາຄວາມພ້ອມຂອງຄູ່ມືທີ່ຈະຈັດພິມໃນຕໍ່ໜ້າ; ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມທົດລອງການນຳໃຊ້ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃນວັນທີ 29-31 ສິງຫາຜ່ານມາ ທີ່ເມືອງເຊບັ້ງໄຟ ແຂວງຄຳມ່ວນ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານິນ ຮອງປະທານກຳມາທິການກົດໝາຍ ເຊິ່ງມີທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະປະຈຳ ສພຂ ພ້ອມດ້ວຍພະນັກງານ-ລັດຖະກອນຈາກກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ແລະ ຈາກ ສພຂ ຄຳມ່ວນ ເຂົ້າຮ່ວມ 28 ທ່ານ, ຍິງ 5 ທ່ານ.

ກອງປະຊຸມຄັ້ງນີ້ມີຄວາມສຳຄັນຫຼາຍ ເນື່ອງຈາກວ່າການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນວຽກງານໃໝ່ທີ່ພະນັກງານ-ລັດຖະກອນໃນຖານະທີ່ເປັນເສນາທິການໃຫ້ແກ່ສະພາປະຊາຊົນຂັ້ນແຂວງ; ຜູ້ເຂົ້າຮ່ວມ ໄດ້ນຳເອົາວຽກງານຕົວຈິງ ໂດຍສະເພາະແມ່ນນິຕິກຳຂອງແຂວງມາທົດລອງເຮັດການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຕາມຄູ່ມືທີ່ຮ່າງຂຶ້ນ, ນອກຈາກນັ້ນ ຍັງໄດ້ແລກປ່ຽນບົດຮຽນຕົວຈິງທີ່ປະຕິບັດຜ່ານມາ ເພື່ອສົມທຽບກັບເນື້ອໃນຂອງຄູ່ມືອີກດ້ວຍ.

ກອງປະຊຸມໄດ້ຮັບການສະໜັບສະໜູນຈາກມູນນິທິເວດມິນເທີ ເພື່ອປະຊາທິປະໄຕ (Westminster Foundation for Democracy-WFD).

**(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)**

# ກົມວຽກງານຊົນເຜົ່າ ພົບປະ ກົມຮ່ວມມືສາກົນ



(ສພຊ) - ຕອນບ່າຍວັນທີ 3 ກັນຍາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ສົງ ເລືອງວິຫານ ຫົວໜ້າກົມວຽກງານຊົນເຜົ່າ, ກຳມາທິການບັນດາເຜົ່າ ໄດ້ພົບປະແລະເຮັດວຽກກັບທ່ານ ເຫຼີນ ຊຽງກວາງ (REN Xianguang) ຫົວໜ້າກົມຮ່ວມມືສາກົນ, ຄະນະກຳມະການຊົນເຜົ່າແຫ່ງຊາດຈີນ ພ້ອມດ້ວຍຄະນະ ໃນໂອກາດເດີນທາງມາຢ້ຽມຢາມແລະເຮັດວຽກຮ່ວມກັບກະຊວງພາຍໃນ ຂອງ ສປປລາວ ລະຫວ່າງວັນທີ 1-5 ກັນຍາ 2024.

ທ່ານ ສົງ ເລືອງວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ທັງແຈ້ງໃຫ້ຊາບໂດຍຫຍໍ້ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກົມວຽກງານຊົນເຜົ່າ; ພ້ອມກັນນັ້ນ, ກໍສະແດງຄວາມຂອບໃຈຕໍ່ການມາພົບປະແລະເຮັດວຽກໃນຄັ້ງນີ້ ເຊິ່ງຈະເປັນການປະກອບສ່ວນເສີມສ້າງການພົວພັນລະດັບວິຊາການຂອງສອງປະເທດລາວ-ຈີນ ໃຫ້ນັບມື້ເກີດດອກອອກຜົນຍິ່ງໆຂຶ້ນ.

ທ່ານ ເຫຼີນ ຊຽງກວາງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ຈຸດປະສົງການມາເຮັດວຽກຮ່ວມກັບກະຊວງພາຍໃນຂອງ ສປປລາວ; ພາລະບົດບາດ, ສິດ, ໜ້າທີ່ແລະໂຄງປະກອບກົງຈັກການຈັດຕັ້ງຂອງກົມຮ່ວມມືສາກົນ, ຄະນະກຳມະການຊົນເຜົ່າແຫ່ງຊາດຈີນ.

**(ນາງ ອາລິນ ສຸພົມມະປະກິດ)**



## ມອບວັດຖຸພັນ...

(ຕໍ່ຈາກໜ້າ 1)

(ສພຊ) - ເນື່ອງໃນໂອກາດທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໄອປາ ຄັ້ງທີ 45, ສະພາແຫ່ງຊາດ ພວມຊຸ້ນຂ້ຽວສ້າງຫໍມູນເຊື້ອປະຫວັດສາດຂອງສະພາແຫ່ງຊາດ ແລະ ພວມຮິບໂຮມເອົາບັນດາວັດຖຸພັນທີ່ສຳຄັນ ເພື່ອມາປະກອບໃສ່ຫ້ອງມູນເຊື້ອໃຫ້ມີຄວາມຄົບຖ້ວນສົມບູນ, ທັງເປັນການເກັບຮັກສາວັດຖຸພັນທີ່ມີຄຸນຄ່າມາໄວ້ຫ້ອງມູນເຊື້ອ ເຊິ່ງຈະເປັນບ່ອນທີ່ພະນັກງານ-ລັດຖະກອນ, ປະຊາຊົນ, ນ້ອງນັກຮຽນ ສາມາດເຂົ້າຊົມແລະສາມາດຮຽນຮູ້ໄດ້ປະຫວັດສາດຂອງສະພາແຫ່ງຊາດລາວ ທີ່ມີອາຍຸໃກ້ຈະຮອດ 50 ປີ ໃນປີ 2025 ໜ້ານີ້; ຕອນບ່າຍວັນຈັນທີ 2 ກັນຍາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ໃຫ້ກຽດຮັບບັນດາວັດຖຸພັນທີ່ກ່ຽວຂ້ອງເຖິງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ໂດຍການມອບຈາກທ່ານ ສົງ ເລືອງວິຫານ ຫົວໜ້າກົມວຽກງານຊົນເຜົ່າ, ກຳມາທິການບັນດາເຜົ່າ ຜູ້ທີ່ເກັບຮັກສາວັດຖຸພັນດັ່ງກ່າວມາເປັນເວລາຫຼາຍປີ. ທ່ານ ສົງ ເລືອງວິຫານ ໄດ້ກ່າວວ່າ: ວັດຖຸຈະມີຄ່າເມື່ອຢູ່ຖືກທີ່ ແລະ ໂດຍເຫັນໄດ້ຄວາມສຳຄັນຂອງວັດຖຸພັນ ທ່ານຈຶ່ງໄດ້ນຳມາມອບໃຫ້ຫ້ອງມູນເຊື້ອເຊິ່ງປະກອບມີ: ປຶ້ມຮັບເງິນເດືອນຂອງພະນັກງານສະພາປະຊາຊົນສູງສຸດ, ຫີບບ່ອນບັດເລືອກຕັ້ງ, ກາປະທັບຄະນະປະຈຳສະພາປະຊາຊົນສູງສຸດ, ແມ່ພິມບັດເຊີນ, ໄມໂຄຣໂຟນທີ່ໃຊ້ໃນຫ້ອງປະຊຸມສະພາປະຊາຊົນສູງສຸດ ແລະ ຫຼຽນກາທີ່ລະລຶກຕ່າງໆ. ນອກນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ຍັງໄດ້ມອບເຄື່ອງຂອງຂວັນທີ່ຕ່າງປະເທດມອບໃຫ້ທ່ານ ເພື່ອປະກອບເຂົ້າເປັນວັດຖຸພັນໃນຫ້ອງມູນເຊື້ອ ແລະ ປະຫວັດສາດ ຕື່ມອີກ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຊົມເຊີຍແລະຂອບໃຈຕໍ່ການມອບວັດຖຸພັນດັ່ງກ່າວ ພ້ອມທັງຮຽກຮ້ອງໃຫ້ບັນດາທ່ານຫາກມີວັດຖຸ ຫຼື ອຸປະກອນຕ່າງໆທີ່ເຫັນວ່າເປັນມູນເຊື້ອປະຫວັດສາດທີ່ກ່ຽວພັນເຖິງສະພາແຫ່ງຊາດແຕ່ລະຊຸດ ກໍສາມາດນຳມາປະກອບສ່ວນເຂົ້າໃນ ພິພິທະພັນຂອງສະພາແຫ່ງຊາດໄດ້.

**(ນາງ ອາລິນ ສຸພົມມະປະກິດ)**

# ກຜງສ ເຄື່ອນໄຫວວຽກງານຢູ່ຫຼວງນໍ້າທາ




(ສພຂ) - ເພື່ອຮັບປະກັນໃຫ້ການຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດວຽກງານການຕິດຕາມກວດກາຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ໃນລະຫວ່າງວັນທີ 22-23 ສິງຫາ 2024 ຜ່ານມານີ້; ກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ນຳໂດຍທ່ານ ທັນຕາ ກອງຜາລີ ຮອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງຫຼວງນໍ້າທາ; ໃນໂອກາດດັ່ງກ່າວຄະນະໄດ້ເຂົ້າຂໍ່ານັບການນຳຂອງແຂວງ ພ້ອມທັງ ເປີດກອງປະຊຸມຮ່ວມກັບສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງແຂວງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານທ່ານ ທັນຕາ ກອງຜາລີ ຮອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ແລະ ໂດຍການໃຫ້ກຽດເຂົ້າຮ່ວມຂອງ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ເຂົ້າຮ່ວມມີ ຮອງປະທານສະພາປະຊາຊົນແຂວງ, ປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ, ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງ, ທະນາຄານ, ຫົວໜ້າ, ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງ ເຂົ້າຮ່ວມທັງໝົດ 33 ທ່ານ, ໃນກອງປະຊຸມໄດ້ຮັບຟັງການລາຍງານຫຍໍ້ຈາກບັນດາພະແນກການທີ່ກ່ຽວຂ້ອງອ້ອມຂ້າງແຂວງເປັນຕົ້ນແມ່ນຄວາມຄືບໜ້າການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງຕາມມະຕິທີ່ສະພາປະຊາຊົນແຂວງຮັບຮອງ, ການຜະລິດເປັນສິນຄ້າເພື່ອທົດແທນການນຳເຂົ້າ ແລະ ສົ່ງອອກຕ່າງປະເທດທີ່ເປັນພື້ນຖານຂອງແຂວງ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ແລະ ການລົງທຶນຂອງພາກເອກະຊົນ, ການກະກຽມແຜນການຈັດສັນໂຄງການລົງທຶນຂອງລັດປີ 2025, ສະພາບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ 2024 ຂອງແຂວງ, ການແບ່ງຂັ້ນຄຸ້ມຄອງໃນການຈັດເກັບລາຍຮັບລະຫວ່າງສູນກາງ ແລະ ທ້ອງຖິ່ນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການນຳໃຊ້ເຄື່ອງມືທີ່ທັນສະໄໝໃນການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ, ການຈັດຕັ້ງປະຕິບັດມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ, ການເຜີຍແຜ່ ແລະ ການຈັດຕັ້ງປະຕິບັດກົດໝາຍອາກອນທີ່ດິນຢູ່ແຂວງ, ການກະກຽມຮ່າງແຜນງົບປະມານແຫ່ງລັດ ແລະ ງົບປະມານການລົງທຶນຂອງລັດປະຈຳປີ 2025, ການຈັດຕັ້ງປະຕິບັດແຜນເງິນຕາປະຈຳປີ 2024 ຂອງແຂວງ, ການຈັດຕັ້ງປະຕິບັດກົດໝາຍຂົງເຂດທະນາຄານ, ການຄຸ້ມຄອງເງິນຕາຕ່າງປະເທດຢູ່ພາຍໃນແຂວງ, ການຄຸ້ມຄອງການແລກປ່ຽນເງິນຕາຕ່າງປະເທດ, ການຕິດລາຄາສິນຄ້າ ແລະ ການຊຳລະເປັນເງິນກີບ, ການຄຸ້ມຄອງການນຳໃຊ້ເງິນຕາຕ່າງປະທດຢູ່ຊາຍແດນ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກໃນການສະໜອງສິນເຊື່ອເພື່ອການສົ່ງເສີມການຜະລິດທົດແທນການນຳເຂົ້າສິນຄ້າຈາກຕ່າງປະເທດພາຍໃນແຂວງ.

ການລົງເຄື່ອນໄຫວໃນຄັ້ງນີ້ແມ່ນເພື່ອຍົກສູງພາລະບົດບາດຕິດຕາມ, ຊຸກຍູ້, ກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດວຽກງານແຜນການ, ການເງິນ ແລະ ການກວດສອບ, ເພື່ອຊຸກຍູ້ໃຫ້ການເຄື່ອນໄຫວຢູ່ແຂວງຫລວງນໍ້າທາຂອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການທີ່ວາງໄວ້, ເພື່ອເກັບກຳຂໍ້ມູນກ່ຽວກັບຂົງເຂດວຽກງານແຜນການ, ການເງິນ ແລະ ການກວດສອບ ພາຍໃນແຂວງເພື່ອກະກຽມເນື້ອໃນໃຫ້ຄະນະປະຈຳສະພາແຫ່ງຊາດ ແລະ ສະເໜີລັດຖະບານຫາວິທີແກ້ໄຂ.

ໂອກາດນີ້ກຜງສ ສະພາແຫ່ງຊາດ ນຳໂດຍທ່ານ ທັນຕາ ກອງຜາລີ ຮອງກຳມາທິການແຜນການ, ການເງິນ ແລະ ການກວດສອບ ຮ່ວມຄະນະກຳມະການເສດຖະກິດແຜນການ ແລະ ການເງິນ ສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ ເຂດເສດຖະກິດພິເສດບໍ່ເຕັ່ນແດນງາມເພື່ອຮັບຟັງການລາຍງານກ່ຽວກັບສະພາບລວມຂອງຄະນະຄຸ້ມຄອງດ່ານສາກົນບໍ່ເຕັ່ນແດນງາມ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການຈັດເກັບລາຍຮັບຂອງດ່ານບໍ່ເຕັ່ນ ແລະ ຮັບຟັງສະພາບລວມການພັດທະນາເຂດເສດຖະກິດບໍ່ເຕັ່ນແດນງາມ ຂອງແຂວງຫຼວງນໍ້າທາ ນອກນັ້ນ ຍັງໄດ້ລົງພື້ນທີ່ຕົວຈິງເບິ່ງກິດຈະກຳບາງສ່ວນຂອງເຂດເສດຖະກິດບໍ່ເຕັ່ນແດນງາມ.

**(ນາງ ອຳພອນ ສີປະເສີດ)**

# ສພຂ ອຸດົມໄຊ ເຊື່ອມຊຶມເອກະສານ ວຽກງານປະເມີນຜົນງານປະຈຳປີ



(ສພຂ) - ການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແມ່ນວິທີການຕີລາຄາ ແລະ ປະເມີນຜົນຕາມມາດຖານວັດແທກການປະເມີນຜົນ ແລະ ຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານ ຂອງພະນັກງານ-ລັດຖະກອນ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ. ໂດຍປະຕິບັດຕາມດຳລັດ ສະບັບເລກທີ 300/ລບ, ລົງວັນທີ 13.9.2017 ວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ. ຕອນບ່າຍຂອງວັນທີ 27 ສິງຫາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມເຊື່ອມຊຶມເອກະສານວຽກງານການປະເມີນຜົນງານປະຈຳປີ 2024 ໂດຍການເປັນປະທານຂອງທ່ານນາງຄຳພອນ ພົມມະຈັນ ຮອງປະທານສະພາປະຊຊາຊົນແຂວງ ທັງເປັນຜູ້ຊີ້ນຳວຽກງານຄະນະເລຂາທິການສະພາປະຊາຊົນແຂວງ, ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ຄະນະເລຂາທິການ ແລະ ພະນັກງານວິຊາການພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ຢູ່ໃນກອງປະຊຸມ, ຜ່ານມະຕິຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 1027/ຄປຈ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນສະພາປະຊາຊົນແຂວງ ປະຈຳປີ 2024; ແຈ້ງການຂອງພະແນກພາຍໃນແຂວງ ສະບັບເລກທີ 699/ພນຂ, ລົງວັນທີ 02 ກໍລະກົດ 2024 ວ່າດ້ວຍການປະເມີນຜົນການປະຕິບັດວຽກງານ ແລະ ຍ້ອງຍໍປະຈຳປີ; ດຳລັດ ເລກທີ 300/ລບ, ລົງວັນທີ 13 ກັນຍາ 2017 ວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ຄຳແນະນຳຂອງເຈົ້າແຂວງ ເລກທີ 939/ອຊ, ລົງວັນທີ 03 ຕຸລາ 2022 ກ່ຽວກັບການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ຕິດພັນກັບການແຂ່ງຂັນ ແລະ ຍ້ອງຍໍ ປະຈຳປີ.

ຕອນທ້າຍກອງປະຊຸມ, ປະທານກອງປະຊຸມ ໄດ້ມີຄຳເຫັນໂອ້ລົມ, ເຊິ່ງທ່ານໄດ້ເນັ້ນໜັກໃຫ້ຄະນະຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນສະພາປະຊາຊົນແຂວງ ຕ້ອງດຳເນີນໄປຕາມຫຼັກການ, ລະບຽບການ, ຕາມຄຳແນະນຳ, ແບ່ງເປັນຈຸໃນການປະເມີນ ແລະ ຈັດຕັ້ງປະຕິບັດໃຫ້ສຳເລັດຕາມລະດັບຄາດໝາຍທີ່ກຳນົດໄວ້. ພ້ອມນັ້ນ, ຈົ່ງເອົາໃຈໃສ່ຕໍ່ໜ້າທີ່ການເມືອງຂອງຕົນ, ເພີ່ມທະວີຄວາມຮັບຜິດຊອບສູງ ແລະ ປະຕິບັດໜ້າທີ່ຕາມການມອບໝາຍໃຫ້ມີຜົນສຳເລັດ.

ແລະ ຕອນເຊົ້າຂອງວັນທີ 28 ສິງຫາ 2024; ທີ່ຫ້ອງປະຊຸມສະພາປະຊາຊົນແຂວງອຸດົມໄຊ ໄດ້ຈັດກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງປະຈຳເດືອນ ສິງຫາ 2024 ໂດຍການເປັນປະທານຂອງທ່ານ ຄຳດີວົງລ້ອມຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າ/ຮອງຫົວໜ້າພະແນກການ ແລະ ພະນັກງານວິຊາການ: ພະແນກຊັບພະຍາກອນທຳຊາດ ແລະ ສິ່ງແວດລ້ອມແຂວງ, ພະເເັກໂນໂລຊີ ແລະ ການສື່ສານແຂວງ ແລະ ພະແນກພະລັງງານ ແລະ ບໍ່ແຮ່ແຂວງ.

ໃນກອງປະຊຸມ ໄດ້ຮັບຟັງການລາຍງານການປັບປຸງຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດເຂດສະຫງວນນໍ້າ ແລະ ຊັບພະຍາກອນນໍ້າຢູ່ແຂວງອຸດົມໄຊ; ບົດລາຍງານການປັບປຸງຮ່າງຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການດຳເນີນທຸລະກິດບໍລິການດ້ານເຕັກໂນໂລຊີການສື່ສານຂໍ້ມູນ-ຂ່າວສານ ຢູ່ແຂວງອຸດົມໄຊ; ບົດລາຍງານການປັບປຸງຮ່າງຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງການບໍລິການ, ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າຢູ່ແຂວງອຸດົມໄຊ; ລາຍງານໂດຍສັງເຂບກ່ຽວກັບການກະກຽມເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດຍຸທະສາດ ການປະຕິຮູບລະບົບການສຶກສາແລະການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ໃນໄລຍະຜ່ານມາ ຮ່ວມກັບສະພາແຫ່ງຊາດ; ລາຍງານໂດຍສັງເຂບ ການກະກຽມເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດການກໍ່ສ້າງ, ບູລະນະສ້ອມແປງເສັ້ນທາງ ແລະ ການພັດທະນາຂະຫຍາຍໂຄງລ່າງພື້ນຖານທີ່ຈຳເປັນເຊື່ອມຈອດເຂົ້າສູ່ແລວທາງເສດຖະກິດຢູ່ຂອບເຂດທົ່ວປະເທດຮ່ວມກັບສະພາແຫ່ງຊາດ; ຜ່ານຮ່າງບົດສະຫຼູບປະຈຳເດືອນສິງຫາ ແລະ ທິດທາງແຜນການ ປະຈຳເດືອນກັນຍາ ປີ 2024 ຂອງຄະນະປະຈຳສະພາປະຊາຊົນແຂວງ ແລະ ລາຍງານການປັບປຸງຂໍ້ກຳນົດຊື່ວຄາວວ່າດ້ວຍລະບຽບແລະການປະຕິບັດນະໂຍບາຍພາຍໃນ ສະພາປະຊາຊົນແຂວງອຸດົມໄຊ. ພາຍຫຼັງສຳເລັດການລາຍງານຜູ້ເຂົ້າຮ່ວມໄດ້ມີຄຳຄິດຄຳເຫັນແລກປ່ຽນກັນ, ຕາງໜ້າພະແນກທີ່ກ່ຽວຂ້ອງໄດ້ຊີ້ແຈງບາງບັນຫາຕໍ່ກອງປະຊຸມ. ກອງປະຊຸມໄດ້ດຳເນີນເປັນເວລາໜຶ່ງຕອນ.

**(ສີແຫວງ ສີບຸນເຮືອງ)**



## ສະພາປະຊາຊົນແຂວງຫຼວງນ້ຳທາ ຕິດຕາມກວດກາ ແຜນການພັດທະນາເສດຖະກິດ-ສັງຄົມ ຢູ່ 2 ເມືອງ




(ສພຂ) - ເພື່ອປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາປະຊາຊົນແຂວງໃນການລົງຕິດຕາມກວດກາ ລະຫວ່າງວັນທີ 19-22 ສິງຫາ 2024 ນີ້ສະພາປະຊາຊົນແຂວງຫຼວງນ້ຳທາ ນຳໂດຍ ທ່ານ ຄຳພອນ ເຕີນຈະເລີນ ສະມາຊິກສະພາປະຊາຊົນແຂວງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍຄະນະ ໄດ້ລົງຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ກ່ຽວກັບໂຄງການລົງທຶນຂອງລັດ ແລະ ເອກະຊົນຢູ່ເມືອງສິງ ແລະ ເມືອງລອງ; ໄດ້ຈັດກອງປະຊຸມຮ່ວມ ຢູ່ທີ່ຫ້ອງວ່າການເມືອງສິງ, ເມືອງລອງ ໂດຍພາຍໃຕ້ການເປັນປະທານຂອງທ່ານ ຄຳພອນ ເຕີນຈະເລີນ ສະມາຊິກສະພາປະຊາຊົນແຂວງ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ມີກຳມະການພັກເມືອງ, ຮອງເຈົ້າເມືອງ, ພະແນກການກ່ຽວຂ້ອງຂອງແຂວງ, ບັນດາຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງລາຍງານໂດຍຫຍໍ້ສະພາບລວມການຈັດຕັ້ງປະຕິບັດບັນດາໂຄງການ ແລະ ຜົນໄດ້ຮັບຈາກໂຄງການໃນໄລຍະຜ່ານມາຂອງເມືອງສິງ, ເມືອງລອງ ແຂວງຫລວງນ້ຳທາ; ຮັບຟັງການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ເອກະຊົນ ແລະການນຳໃຊ້ເງິນເກີນແຜນຢູ່ພາຍໃນເມືອງ ປະຈຳປີ 2023 ແລະຮັບຟັງສະພາບການຈັດຕັ້ງປະຕິບັດໂຄງການກອງທຶນທາງຂອງບັນດາເມືອງ ໃນໄລຍະຜ່ານມາ ແລະ ຮັບຟັງຕາມຄຳຖາມເຈາະຈີ້ມຂອງຄະນະກຳມະການເປັນຕົ້ນ: ສະພາບເງິນເຟີ້ມີຜົນກະທົບຕໍ່ໂຄງການລົງທຶນຂອງລັດ, ວິທີແກ້ໄຂແນວໃດໃນໄລຍະຜ່ານມາແລະຜົນກະທົບໂຄງການຕໍ່ສິ່ງແວດລ້ອມແນວໃດ ນອກນັ້ນ ຍັງໄດ້ຮັບຟັງບັນດາຫ້ອງການທີ່ກ່ຽວຂ້ອງຂອງເມືອງທີ່ຮັບຜິດຊອບໂຄງການລົງທຶນຂອງລັດ ໃນການຈັດຕັ້ງປະຕິບັດໂຄງການມີຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຄວາມຄືບໜ້າຂອງໂຄງການແນວໃດ; ພ້ອມດຽວກັນ ຜູ້ແທນກອງປະຊຸມຢູ່ບັນດາເມືອງຍັງໄດ້ສະເໜີບັນຫາທີ່ພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ແລະ ໄດ້ແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ທັງນີ້ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຂອງລັດ, ເອກະຊົນພາຍໃນເມືອງ ໃຫ້ມີຄວາມສະດວກ, ມີຄວາມຄືບໜ້າ ສາມາດຈັດຕັ້ງປະຕິບັດໃຫ້ມີຄຸນນະພາບ ແລະ ສຳເລັດຕາມລະດັບຄາດໝາຍ; ຈາກນັ້ນ ຍັງໄດ້ລົງຕິດຕາມກວດກາລົງພື້ນທີ່ຕົວຈິງຂອງບັນດາໂຄງການລົງທຶນຂອງລັດ ແລະ ເອກະຊົນຢູ່ບັນດາເມືອງ.

ກອງປະຊຸມຄັ້ງນີ້ ແມ່ນໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ (STEPS).

## ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ຊຸກຍູ້ວຽກງານຢູ່ 6 ເມືອງຂອງແຂວງຫຼວງພະບາງ



(ສພຂ) - ທ່ານ ນາງ ແກ້ວລາ ມະນີຈິດ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະບັນດາເຜົ່າ ສະພາປະຊາຊົນແຂວງຫຼວງພະບາງພ້ອມດ້ວຍຄະນະ ໄດ້ລົງຕິດຕາມກວດກາການໃຊ້ຄວາມຮຸນແຮງໃນຄອບຄົວ, ສັງຄົມ ແລະການປົກປ້ອງ ຜົນປະໂຫຍດຂອງແມ່ຍິງ ແລະເດັກ ຢູ່ເມືອງນ້ຳບາກ, ເມືອງພູຄູນ, ເມືອງນານ, ເມືອງຊຽງເງິນແລະເມືອງຈອມເພັດ. ການລົງຊຸກຍູ້ຄັ້ງນີ້ ໄດ້ຮັບຟັງການລາຍງານ ຈາກຫ້ອງການທີ່ກ່ຽວຂ້ອງ ກ່ຽວກັບປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ໂດຍສະເພາະແມ່ນການໃຊ້ຄວາມຮຸນແຮງໃນຄອບຄົວ, ສັງຄົມ ແລະ ການປົກປ້ອງຜົນປະໂຫຍດຂອງແມ່ຍິງ ແລະເດັກ ທີ່ຕິດພັນກັບການຈັດຕັ້ງປະຕິບັດລັດຖະທຳມະນູນແຫ່ງ ສປປ ລາວ, ລວມທັງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ; ກົດໝາຍວ່າດ້ວຍການປົກປ້ອງສິດແລະຜົນປະໂຫຍດຂອງເດັກ ເຫັນວ່າບັນດາປາກົດການຫຍໍ້ທໍ້ທີ່ເກີດຂຶ້ນຫຼາຍຢູ່ບັນດາເມືອງ ແມ່ນບັນຫາເດັກບໍ່ເຖິງອາຍຸ 18 ປີ ແຕ່ໃຫ້ນາຍໜ້າປອມແປງເອກະສານ (ປ່ຽນສຳມະໂນຄົວ) ເພື່ອໄປອອກແຮງງານຢູ່ຕ່າງແຂວງ ແລະຕ່າງປະເທດ; ການແຕ່ງດອງກັບຕ່າງປະເທດ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ, ບັນຫານາຍໜ້າຊອກຫາຍິງສາວເພື່ອໄປເຮັດວຽກ ແລະ ແຕ່ງດອງກັບຄົນຕ່າງປະເທດ, ເຊິ່ງບັນຫາດັ່ງກ່າວ ລ້ວນແລ້ວແຕ່ຕິດພັນກັບການຕົກເປັນເຍື່ອຂອງການຄ້າມະນຸດ, ບັນຫາການປະລະການຮຽນ ຂອງນັກຮຽນຊັ້ນປະຖົມ ແລະ ມັດທະຍົມ, ນອກຈາກນີ້ຍັງມີເດັກບໍ່ເຖິງກະສຽນຕິດສິ່ງເສບຕິດ ແລະມີການໃຊ້ຄວາມຮຸນແຮງຕໍ່ສະມາຊິກໃນຄອບຄົວ ຈາກຜົນຮ້າຍຂອງຢາເສບຕິດ. ໂອກາດນີ້, ທ່ານ ນາງ ແກ້ວລາ ມະນີຈິດ ໄດ້ມີຄຳເຫັນຊີ້ນຳໃຫ້ເຈົ້າໜ້າທີ່ ແລະ ຫ້ອງການທີ່ກ່ຽວຂ້ອງຂອງເມືອງເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຕ່າງໆ ທີ່ຕິດພັນກັບການຕ້ານແລະສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ໃຫ້ໄດ້ຮັບຜົນດີ: ເພີ່ມທະວີໃນການຕິດຕາມກວດກາ ຕໍ່ກັບແຮງງານທີ່ເຄື່ອນຍ້າຍອອກໄປຕ່າງແຂວງ ແລະ ຕ່າງປະເທດ ໂດຍຜ່ານບໍລິສັດຕ່າງໆ ເພື່ອເປັນການເກັບກຳສະຖິຕິແຮງງານໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ເປັນເຈົ້າການຊ່ວຍກັນເພື່ອສະກັດກັ້ນແລະຊອກຫາວິທີແກ້ໄຂບໍ່ໃຫ້ນັກຮຽນປະລະການຮຽນ, ສະເໜີບັນດາທ່ານເອົາໃຈໃສ່ໃນການສ້າງຜົນງານດ້ານຕ່າງໆ ເພື່ອສ້າງຂະບວນການຕ້ອນຮັບກອງປະຊຸມໃຫຍ່ຂອງໜ່ວຍພັກ, ຄະນະພັກຮາກຖານອ້ອມຂ້າງເມືອງ, ກອງປະຊຸມໃຫຍ່ອົງຄະນະພັກເມືອງ ທີ່ຈະເປີດຂຶ້ນໃນຕໍ່ໜ້າ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ພ້ອມກັນອົດທົນຜ່ານຜ່າຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ສັງຄົມ ຂອງປະເທດພວກເຮົາ, ພ້ອມກັນປຸກລະດົມທຸກກຳລັງແຮງເພື່ອພັດທະນາເມືອງໃຫ້ຈະເລີນກ້າວໜ້າ.

**(ເຜີດສະໝອນ ທຳມຸງຄຸນ)**

## ສສຊ ແຂວງຫົວພັນ ເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ວຽກງານສາທາລະນະສຸກຢູ່ຂັ້ນເມືອງ

(ສພຂ) - ລະຫວ່າງກາງເດືອນສິງຫາ 2024 ນີ້, ທ່ານ ສີຄຳບຸນມີໄຊປະທານຄະນະກຳມະການວັດທະນະທຳ, ສັງຄົມ ແລະບັນດາເຜົ່າສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ທ່ານ ອຳຈະເລີນ ສອນທະວີໄຊ ຮອງປະທານກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ, ຮອງພະແນກສາທາລະນະສຸກແຂວງ ພ້ອມດ້ວຍທີມງານໄດ້ສືບຕໍ່ລົງເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຕົວຊີ້ວັດທີ່ມີຄວາມສ່ຽງບໍ່ບັນລຸໃນຂົງເຂດວັດທະນະທຳ-ສັງຄົມ ຢູ່ເມືອງຊຳໃຕ້, ເມືອງກວັນເມືອງຊ່ອນ, ເມືອງ ຮ້ຽມ ແລະ ເມືອງຫົວເມືອງ.



ການລົງເຄື່ອນໄຫວໃນຄັ້ງນີ້; ໄດ້ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ 11 ຕົວຊີ້ວັດຢູ່ສຸກສາລານາມາດເມືອງຊຳໃຕ້; ສຸກສາລານາໜັງ ເມືອງກວັນ; ໂຮງໝໍນ້ອຍລ້ອງຊາຍເມືອງຊ່ອນ; ໂຮງໝໍນ້ອຍສິບເລົ້າເມືອງຫົວເມືອງແລະຮັບຟັງການລາຍງານສະພາບລວມໂດຍຫຍໍ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍຈາກບັນດາຫ້ອງການຂັ້ນເມືອງ ໃນຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນ: ຫ້ອງການສາທາ 11 ຕົວຊີ້ວັດ; ຫ້ອງການສຶກສາ 14 ຕົວຊີ້ວັດ; ຫ້ອງການຖະແຫຼງຂ່າວ 4 ຕົວຊີ້ວັດ ແລະ ຫ້ອງການແຮງງານ 6 ຕົວຊີ້ວັດ ແລະ ໄດ້ຮັບຟັງການລາຍງານຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ ຂອງອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຈາກບັນດາຫ້ອງການທີ່ກ່ຽວຂ້ອງ ແລະ ສຸກສາລາ ເຫັນວ່າບັນດາຕົວເລກຄາດໝາຍບໍ່ບັນລຸ ແລະ ຍັງມີບາງຄາດໝາຍ ມີຄວາມສ່ຽງບໍ່ບັນລຸ ເປັນຕົ້ນແມ່ນອັດຕາການເກີດລູກມີແພດຊ່ວຍ ແລະການຊັກວັກຊິນກັນພະຍາດເດັກລຸ່ມ 1 ປີ ບໍ່ບັນລຸ. ນອກນີ້, ຍັງໄດ້ຮັບຄຳຟັງຄິດຄຳເຫັນ, ຄຳສະເໜີຈາກພໍ່ແມ່ປະຊາຊົນຈຳນວນໜຶ່ງ ເຊັ່ນ: ການບໍລິການຂອງພໍ່ແມ່ປະຊາຊົນ ແມ່ມານຖືພາທີ່ບໍ່ມີບັດປະກັນສັງຄົມ, ພະນັກງານແພດໝໍບໍ່ພຽງພໍ, ທຶນຕໍ່ເຕີມສຸກສາລາ, ກອງທຶນປະກັນສຸຂະພາບແຫ່ງຊາດ, ຂໍທຶນສ້າງໂຮງຮຽນຫາດໄກ, ສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແລະອື່ນໆ. ຈາກນັ້ນ ຄະນະທີມງານກໍໄດ້ອະທິບາຍ, ຊີ້ແຈງ ໃຫ້ຂະແໜງການທີ່ກ່ຽວຂ້ອງຂອງເມືອງຄົ້ນຄວ້າປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງເມືອງ ແລະ ແຂວງ.

ພ້ອມດຽວກັນນັ້ນ, ບັນດາທ່ານຍັງໄດ້ມີຄຳເຫັນເນັ້ນໜັກໃຫ້ພາກສ່ວນກ່ຽວຂ້ອງເພີ່ມທະວີປະສານສົມທົບກັບຫຼາຍພາກສ່ວນ, ເປັນເຈົ້າການແກ້ໄຂບັນຫາຕົວຊີ້ວັດທີ່ມີຄວາມສ່ຽງທີ່ບໍ່ບັນລຸທີ່ແມ່ນຄວາມຮັບຜິດຊອບຂອງທ້ອງຖິ່ນ; ເອົາໃຈໃສ່ຄຸ້ມຄອງການນຳໃຊ້ງົບປະມານ, ການບໍລິການວຽກງານໃຫ້ມີປະສິດທິຜົນ, ປະສິດທິພາບ; ເອົາໃຈໃສ່ເກັບກຳຂໍ້ມູນບັນດາຕົວເລກຊີ້ວັດໃຫ້ມີຄວາມລະອຽດ, ຊັດເຈນ ເພື່ອເຮັດໃຫ້ບັນດາເປົ້າໝາຍໄດ້ຮັບການບໍລິການຕາມນະໂຍບາຍທີ່ພັກ-ລັດ ວາງອອກ; ສືບຕໍ່ນຳເອົານິຕິກຳ, ລະບຽບກົດໝາຍ ທີ່ກ່ຽວຂ້ອງໂຄສະນາ ສຶກສາອົບຮົມໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈ.

ໂອກາດທີ່ລົງເຄື່ອນໄຫວຄັ້ງນີ້, ຄະນະທີມງານໄດ້ປະສານສົມທົບກັບເມືອງມອບເຄື່ອງຊ່ວຍເຫຼືອຈຳນວນໜຶ່ງທີ່ປຸກລະດົມຂົນຂວາຍນຳບັນດາບໍລິສັດ ແລະ ຄອບຄົວບຸກຄົນ ເປັນຕົ້ນແມ່ນເງິນສົດ, ອຸປະກອນຮັບໃຊ້ ແລະ ເຄື່ອງນຸ່ງຫົ່ມອື່ນໆ ລວມມູນຄ່າທັງໝົດ 3.500.000 ກີບ ເພື່ອນຳໄປມອບໃຫ້ຄະນະຄຸ້ມຄອງໄພພິບັດຂັ້ນເມືອງ ໄປມອບຕໍ່ໃຫ້ປະຊາຊົນເມືອງຊ່ອນທີ່ຖືກຜົນກະທົບຈາກໄພນ້ຳຖ້ວມ ມອບໂດຍທ່ານ ສີຄຳ ບຸນມີໄຊ ປະທານຄະນະກຳມະການວັດທະນະທຳ, ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ຮັບໂດຍທ່ານ ສີວິໄລ ພົມມະວົງ ກຳມະການພັກແຂວງ ເລຂາພັກເມືອງ, ເຈົ້າເມືອງໆຊ່ອນ.

# ພິທີມອບ-ຮັບ ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ VI ປະຈຳປີ 2023




(ສພຂ) - ວັນທີ 13 ສິງຫາ 2024 ນີ້, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫົວພັນ ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກສະພາປະຊາຊົນແຂວງ ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ VI ປະຈຳປີ 2023 ຂຶ້ນ. ໂດຍການເປັນປະທານຂອງ ສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ, ເປັນກຽດເຂົ້າຮ່ວມໂດຍສະຫາຍຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງ ມີຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ, ຄະນະໂຄສະນາອົບຮົມແຂວງ, ຄະນະກວດກາພັກແຂວງ, ມີບັນດາສະຫາຍຄະນະພັກພະແນກຍຸຕິທຳແຂວງ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງ ຕະຫຼອດຮອດບັນດາສະຫາຍສະມາຊິກພັກສົມບູນ ແລະ ສຳຮອງພາຍໃນໜ່ວຍພັກ ສະພາປະຊາຊົນແຂວງ ເຂົ້າຮ່ວມ.

ໃນພິທີສະຫາຍຄຳຟອງ ກົ້ວມີໄຊ ຮອງເລຂາໜ່ວຍພັກ ສພຂ ໄດ້ຜ່ານບົດສະຫຼຸບຫຍໍ້ກ່ຽວກັບກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ VI ປະຈຳປີ 2023 ແລະທິດທາງແຜນການ ປີ 2024 ຂອງໜ່ວຍພັກສະພາປະຊາຊົນແຂວງ. ຈາກນັ້ນ; ຜູ້ຕາງໜ້າຈາກຄະນະຈັດຕັ້ງແຂວງ ໄດ້ຜ່ານມະຕິຕົກລົງ ຂອງຄະນະປະຈຳພັກແຂວງ ເລກທີ 94/ຄປຈຂ, ລົງວັນທີ 30 ເມສາ 2024 ວ່າດ້ວຍການມອບໃບຢັ້ງຢືນ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄັ້ງທີ VI ປະຈຳປີ 2023, ໃຫ້ກຽດມອບໃບຢັ້ງຢືນຄັ້ງນີ້ໂດຍ ສະຫາຍ ຄອນປະພັນ ເລືອງສີຈັນທອງ ຄະນະປະຈຳພັກແຂວງ, ປະທານສະພາປະຊາຊົນແຂວງ; ຮັບໂດຍ ສະຫາຍ ສົມສັກ ດອນຈານິດ ກຳມະການພັກແຂວງ, ເລຂາໜ່ວຍພັກສະພາປະຊາຊົນແຂວງ.

ຕອນທ້າຍຂອງກອງປະຊຸມຍັງໄດ້ຮັບຟັງການໂອ້ລົມຂອງສະຫາຍຄອນປະພັນເລືອງສີຈັນທອງ ເຊິ່ງສະຫາຍໄດ້ຍ້ອງຍໍຊົມເຊີຍ ຕໍ່ຜົນງານການຊີ້ນຳ-ນຳພາຂອງຄະນະພັກ, ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບສູງ ຂອງສະມາຊິກພັກ ຕະຫຼອດໄລຍະ 1 ປີ ຜ່ານມາ ເຊິ່ງໄດ້ເຮັດໃຫ້ການປັບປຸງກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງດ້ານການເມືອງແນວຄິດ ແລະ ການຈັດຕັ້ງ, ສາມາດຮັກສາມູນເຊື້ອ ໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດຕໍ່ກັນສະໄໝທີ VI ແລະຍັງໄດ້ເນັ້ນໜັກຫຼາຍບັນຫາ ເປັນຕົ້ນແມ່ນ ຄະນະພັກຕ້ອງຖືເອົາການສຶກສາອົບຮົມການເມືອງແນວຄິດ ໃຫ້ແກ່ພະນັກງານສະມາຊິກພັກ ໂດຍການນຳເອົາແນວທາງນະໂຍບາຍ ຂອງພັກ-ລັດ, ລະບຽບກົດໝາຍມາຈັດຕັ້ງເຊື່ອມຊຶມ ໃຫ້ຮັບຮູ້ ແລະ ເຂົ້າໃຈພ້ອມທັງຫັນເຂົ້າສູ່ການຈັດຕັ້ງປະຕິບັດວຽກງານຕົວຈິງ ໃຫ້ມີຜົນສຳເລັດ, ສ້າງສະມາຊິກພັກໃຫ້ມີແນວຄິດອຸ່ນອຽນທຸ່ນທ່ຽງ, ມີຄຸນທາດທາງດ້ານການເມືອງໜັກແໜ້ນ, ຕ້ານິກໍ່ສ້າງຊ່ວຍເຫຼືອເຊິ່ງກັນແລະກັນ, ມີຄວາມສາມັກຄີພາຍໃນໜັກແໜ້ນ ແລະ ພາຍນອກກວ້າງຂວາງ, ມີແບບແຜນນຳພາເປັນໝູ່ຄະນະ, ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ວິທີນຳພາຖືກຕ້ອງຕາມຫລັກການນຳພາຂອງພັກ, ຊີ້ນຳອົງການຈັດຕັ້ງມະຫາຊົນໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ຈຶ່ງພ້ອມກັນກໍ່ສ້າງໜ່ວຍພັກສະພາປະຊາຊົນແຂວງໃຫ້ເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕາມແຜນການທີ່ວາງໄວ້ໃຫ້ປາກົດຜົນເປັນຈິງ.

**(ນາງ ປຸ້ຍນິຕາ ເພັງມີໄຊ)**

# ໜ່ວຍພັກ ສພຂ ວຽງຈັນ ໄດ້ຮັບໃບຢັ້ງຢືນ ໜ່ວຍພັກ ປອດໃສ ເຂັ້ມແຂງ ໜັກແໜ້ນ

(ສພຂ) - ວັນທີ 22 ສິງຫາ 2024 ທີ່ຜ່ານມານີ້, ສະພາປະຊາຊົນແຂວງວຽງຈັນໄດ້ຈັດພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງໜ່ວຍພັກສະພາປະຊາຊົນແຂວງວຽງຈັນ ປະຈຳປີ 2023ໂດຍເປັນກຽດເຂົ້າຮ່ວມຂອງ ສະຫາຍ ທ່ານ ທອງສະຫວັນ ວົງສຳພັນ ຮອງເລຂາພັກແຂວງ ຜູ້ຊີ້ນຳວຽກງານພັກພະນັກງານແຂວງວຽງຈັນເຂົ້າຮ່ວມ ມີບັນດາສະຫາຍ ຄະນະໜ່ວຍພັກສະພາປະຊາຊົນແຂວງ, ຄະນະຮັບຜິດຊອບກໍ່ສ້າງໜ່ວຍພັກປອດໃສເຂັ້ມແຂງໜັກແໜ້ນຂັ້ນແຂວງ; ພ້ອມດ້ວຍບັນດາຄະນະພັກພະແນກການອ້ອມຂ້າງແຂວງ ແລະ ສະມາຊິກພັກພາຍໃນໜ່ວຍສະພາປະຊາຊົນແຂວງເຂົ້າຮ່ວມ.



ສະຫາຍ ທ່ານ ນາງ ຈັນທະຄອນ ສີອຳພອນ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງວຽງຈັນ ໄດ້ຂຶ້ນຜ່ານບົດລາຍງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັ້ກແໜ້ນປະຈຳປີ2023ແລະທິດທາງແຜນການ ປະຈຳປີ 2024; ໃນພິທີສະຫາຍເລຂາໜ່ວຍພັກສະພາປະຊາຊົນແຂວງວຽງຈັນ ໄດ້ກ່າວວ່າ: ໜ່ວຍພັກສະພາປະຊາຊົນແຂວງວຽງຈັນເປັນໜ່ວຍພັກເອກະລາດ, ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະປະຈຳພັກແຂວງ, ນຳພາສະມາຊິກພັກພະນັກງານ-ລັດຖະກອນສະພາປະຊາຊົນແຂວງວຽງຈັນເຄື່ອນໄຫວວຽກງານຕາມພາລະບົດບາດ ແລະ ຕາມການມອບໝາຍຂອງຄະນະພັກຂັ້ນເທິງ, ໜ່ວຍພັກສະພາປະຊາຊົນແຂວງປະກອບມີຄະນະພັກ 3 ສະຫາຍ, ຍິງ 1 ສະຫາຍ, ມີ 4 ຈຸພັກ ຄື: ຈຸພັກຄະນະເລຂາທິການ, ຈຸພັກຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ, ຈຸພັກຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ຈຸພັກຄະນະກຳມະການວັດທະນາທຳ-ສັງຄົມ ແລະບັນດາເຜົ່າ, ມີສະມາຊິກພັກທັງໝົດ 33 ສະຫາຍ, ຍິງ 11 ສະຫາຍ, ສຳຮອງ 2 ສະຫາຍ.ຄະນະໜ່ວຍພັກໂດ້ຖືເອົາວຽກງານສຶກສາອົບຮົມແນວຄິດການເມືອງນຳພາແນວຄິດໃຫ້ແກ່ສະມາຊິກພັກເປັນກົກນຳພາຈັດຕັ້ງເຊື່ອມຊຶມ ບັນດາແນວທາງຂອງພັກ, ມະຕິ, ຄຳສັ່ງຂອງພັກ, ຂໍ້ກຳນົດ, ກົດໝາຍຕ່າງໆຂອງລັດ ຈັດຕັ້ງປາຖະກະຖາວັນສຳຄັນຂອງພັກ, ຂອງຊາດໃຫ້ແກ່ຖັນແຖວສະມາຊິກພັກ-ພະນັກງານເຊັ່ນ: ວັນສ້າງຕັ້ງກອງທັບປະຊາຊົນປະຕິວັດລາວ, ວັນສ້າງຕັ້ງພັກ, ວັນລັດຖະທຳມະນູນ, ວັນສະຖາປານາ ສປປ ລາວ, ມະຕິກອງປະຊຸມໃຫຍ່ຄັ້ງທີ VI ຂອງອົງຄະນະພັກແຂວງວຽງຈັນ, ມະຕິກອງປະຊຸມສະໄໝສາມັນເທື່ອທີ 4-5 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 266 ສະຫາຍ, ຍິງ 85 ສະຫາຍ; ສັງລວມຜົນການປະເມີນສະມາຊິກພັກ ແລະ ໜ່ວຍພັກ ມີສະມາຊິກພັກແຂງທັງໝົດ 29 ສະຫາຍ, ຍິງ 11 ສະຫາຍ ກວມເອົາ 87,87%, ສະມາຊິກພັກ ກາງ 4 ສະຫາຍ, ຍິງ 0 ສະຫາຍ ກວມເອົາ 12,12% ໜ່ວຍພັກມີຄະແນນລວມ 9,5% ຈັດປະເພດໜ່ວຍພັກແຂງພາຍໃນໜ່ວຍພັກໄດ້ເຫັນດີເປັນເອກະພາບ ສະເໜີຄະນະພັກແຂງ. ພາຍໃນໜ່ວຍພັກໄດ້ເຫັນດີເປັນເອກະພາບສະເໜີຄະນະພັກຂັ້ນເທິງພິຈາລະນາເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັ້ກແໜ້ນ ປະຈຳປີ 2023. ໃນໂອກາດນີ້ ໜ່ວຍພັກສະພາປະຊາຊົນແຂວງໄດ້ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັ້ກແໜ້ນ ເປັນກຽດຂຶ້ນມອບໂດຍ ສະຫາຍ ທ່ານ ທອງສະຫ້ວນ ວົງສຳພັນ ຮອງເລຂາພັກແຂວງ ຜູ້ຊີ້ນຳວຽກງານພັກພະນັກງານແຂວງວຽງຈັນ.

# ສສຊ-ສສຂ ລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7

(ສພຂ) - ເພື່ອຍົກສູງສິດ, ພາລະບົດບາດ ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ກໍຄືສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18 ແລະ ສະມາຊິກສະພາປະຊາຊົນແຂວງ ໃຫ້ບັນດາອົງການຈັດຕັ້ງລັດ ແລະ ເອກະຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນ ຜູ້ມີສິດເລືອກຕັ້ງພາຍໃນແຂວງໄຊສົມບູນ ໄດ້ຮັບຮູ້ແລະເຂົ້າໃຈເຖິງແນວທາງແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຂອງແຂວງ ກໍຄືມະຕິກອງປະຊຸມຂອງສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ ຢ່າງທົ່ວເຖິງ. ດັ່ງນັ້ນ ໃນລະຫວ່າງວັນທີ 12-14 /8/ 2024 ຄະນະສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ຈຶ່ງໄດ້ລົງເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ7ຂອງສະພາແຫ່ງຊາດ ຊຸດທີ IX ແລະ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາປະຊາຊົນແຂວງ ຢູ່ທີ່ບ້ານໂພນພະ, ບ້ານມ່ວງສຸ່ມ, ບ້ານຫີນຫົວເສືອ, ບ້ານຫຼັກ 18, ບ້ານຫຼັກ 24, ບ້ານ ໄຊຈະເລີນ ເມືອງອະນຸວົງ ໂດຍນຳໜ້າພາທາງຂອງທ່ານ ພົອ. ວິໄຊທໍ່ ເພຍຫຼວງຈິ່ງເສີ ສະມາຊິກສະພາແຫ່ງຊາດ, ຮອງປະທານສະພາປະຊາຊົນແຂວງ; ທ່ານ ຄຳພູທອນ ວົງພະຈັນ ສະມາຊິກສະພາປະຈຳເມືອງອະນຸວົງ, ຮອງປະທານ ສະພາປະຊາຊົນແຂວງ; ທ່ານ ສັງຄົມ ສູນດາລາ ສສຂ ປະຈຳເມືອງອະນຸວົງ ພ້ອມດ້ວຍພະນັກງານ.




ການລົງເຜີຍແຜ່ໃນຄັ້ງນີ້, ເພື່ອປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍ ທັງເປັນການຍົກສູງພາລະບົດບາດຂອງສະມາຊິກສະພາແຫ່ງຊາດ ໃນນາມຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ທີ່ປະຕິບັດໜ້າທີ່ຢູ່ທ້ອງຖິ່ນ ແລະ ຍົກສູງພາລະບົດບາດຂອງສະພາປະຊາຊົນແຂວງ ກໍຄືສະມາຊິກສະພາປະຊາຊົນແຂວງປະຈຳບັນດາເມືອງ ໃຫ້ຜູ້ມີສິດເລືອກຕັ້ງ ກໍຄືພໍ່ແມ່ປະຊາຊົນໄດ້ເຂົ້າໃຈເລິກເຊິ່ງ, ເພື່ອໃຫ້ບັນດາອົງການຈັດຕັ້ງລັດ ແລະ ເອກະຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນແຂວງໄຊສົມບູນ ໄດ້ຮັບຟັງຜົນສຳເລັດ ຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງແຂວງໃນໄລຍະຜ່ານມາ ແລະ ໄດ້ຮັບຮູ້ແນວທາງແຜນການເຄື່ອນໄຫວໃນຕໍ່ໜ້າຂອງຊາດ ກໍຄືຂອງແຂວງ ແລະ ເປັນການລົງໄກ້ຊິດຕິດແທດກັບພໍ່ແມ່ປະຊາຊົນບັນດາເຜົ່າຜູ້ມີສິດເລືອກຕັ້ງເກັບກຳສະພາບຄວາມຕ້ອງການຂອງປະຊາຊົນຢູ່ບັນດາບ້ານ ເປັນຂໍ້ມູນໃນການວາງແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ສອດຄອງແຕ່ລະໄລຍະ ຫຼັງຈາກນັ້ນ ບັນດາຜູ້ແທນ ຍັງໄດ້ໂອ້ລົມ, ແລກປ່ຽນຄວາມຄິດເຫັນຕໍ່ກັບຂໍ້ຂ້ອງໃຈຂອງພໍ່ແມ່ປະຊາຊົນ ໄດ້ມີຄຳສະເໜີຕໍ່ກັບຜູ້ແທນທີ່ເກີດຈາກປະກົດການຫຍໍ້ທໍ້ຂອງສັງຄົມເພື່ອໃຫ້ສະພານຳເອົາຄຳສະເໜີຈາກປະຊົນໄປໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂຕາມລະບຽບກົດໝາຍ ພ້ອມດຽວກັນນັ້ນຄະນະສສຊ-ສສຂ ກໍ່ໄດ້ຊີ້ແຈງໃຫ້ພໍ່ແມ່ປະຊາຊົນໄດ້ຮັບຮູ້ ແລະ ຕໍ່ກັບບາງບັນຫາທີ່ເຫັນວ່າເປັນບັນຫາໃໝ່ກໍຈະນຳເອົາໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງເພື່ອຫາວິທີແກ້ໄຂໃນໄລຍະຕໍ່ໄປ.

ພາຍຫຼັງສຳເລັດການລົງໂຄສະນາເຜີຍແຜ່ແລ້ວ ແຕ່ລະເມືອງຕ້ອງໄດ້ສະຫຼຸບລາຍງານເປັນລາຍລັກອັກສອນສົ່ງໃຫ້ຄະນະປະຈຳສະພາປະຊາຊົນແຂວງ ໂດຍຍົກໃຫ້ເຫັນດ້ານດີ, ດ້ານຄົງຄ້າງ, ວິທີການແກ້ໄຂ ແລະ ຄຳສະເໜີຂອງປະຊາຊົນ ຕ້ອງໄຈ້ແຍກລະອຽດແຕ່ລະຄຳສະເໜີນອນໃນຄວາມຮັບຜິດຊອບຂອງພາກສ່ວນໃດ, ຄຳສະເໜີທີ່ ສສຊ, ສສຂ ຊີ້ແຈ້ງແລ້ວມີຫຍັງແດ່ຈັກຄຳສະເໜີ, ມອບໃຫ້ບ້ານ, ເມືອງແກ້ໄຂຄຳສະເໜີຕໍ່ພໍ່ແມ່ປະຊາຊົນພາຍໃນເມືອງຂອງຕົນ.

**(ແສງຕາວັນ ລັດຕະນະວົງ)**



## ປະກອບ...

(ຕໍ່ຈາກໜ້າ 1)

(ສພຊ) - ກອງປະຊຸມສຳມະນາປະກອບຄຳເຫັນໃສ່ຮ່າງມະຕິວ່າດ້ວຍການກວດກາ ແລະ ຕ້ານການສໍ້ລາດບັງຫຼວງ ແລະ ຮ່າງມະຕິ, ຄູ່ມືກ່ຽວກັບການເຄື່ອນໄຫວວຽກງານສາຍດ່ວນ 156 ຂອງສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 30 ສິງຫາ-1 ກັນຍາ 2024 ທີ່ເມືອງວຽງຄຳ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານກວດກາພັກ-ລັດ, ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານໃນຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ), ບັນດາທ່ານຮອງປະທານກຳມາທິການ ແລະ ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ສພຊ, ທ່ານຮອງປະທານຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ, ບັນດາທ່ານທີ່ປຶກສາດ້ານກົດໝາຍຂອງ ສພຊ, ບັນດາທ່ານຫົວໜ້າແລະຮອງຫົວໜ້າກົມ/ຫ້ອງການຂອງຄະນະເລຂາທິການສະພາແຫ່ງຊາດ, ບັນດາທ່ານຄະນະກົມທີ່ກ່ຽວ ຂ້ອງຈາກຄະນະກວດກາສູນກາງພັກ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍກວ່າ 60 ທ່ານ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນກ່າວເປີດກອງປະຊຸມວ່າ: ວຽກງານກວດກາເປັນວຽກງານທີ່ມີຄວາມສຳຄັນ, ເປັນສິ່ງຕັດສິນຜົນສຳເລັດ ແລະ ປະສິດທິຜົນຂອງວຽກງານເຊິ່ງພັກໄດ້ກຳນົດວ່າ "ຖ້າບໍ່ມີການກວດກາກໍໝາຍຄວາມວ່າບໍ່ມີການນຳພາ"; ການນຳພາ ແລະ ການປະຕິບັດວຽກງານກວດການັ້ນ, ນອກຈາກມີກົດໝາຍທີ່ກ່ຽວຂ້ອງກຳນົດດ້ານຫຼັກການລວມແລ້ວ, ກໍມີຄວາມຈຳເປັນຕ້ອງໄດ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ເພື່ອກຳນົດບັນດາຫຼັກການ, ຂັ້ນຕອນ, ຄວາມຮັບຜິດຊອບໃນການເຄື່ອນໄຫວວຽກງານຕິດຕາມ, ກວດກາຂອງຄະນະກວດກາຕາມແຜນການປົກກະຕິແລະກວດກາສະເພາະກິດ ເພື່ອເປັນບ່ອນອີງໃນການເຄື່ອນໄຫວດຳເນີນການກວດກາ, ຮັບປະກັນໃຫ້ການເຄື່ອນໄຫວຖືກຕ້ອງຕາມກົດໝາຍ ທັງຮັບປະກັນຄວາມໂປ່ງໃສ, ເຂັ້ມແຂງ ໃນການປະຕິບັດວຽກງານຂອງທຸກພາກສ່ວນສາມາດກວດກາໄດ້ ແນໃສ່ປະກອບສ່ວນແກ້ໄຂປາກົດການຫຍໍ້ທໍ້, ຕ້ານການສໍ້ລາດບັງຫຼວງແລະການລະເມີດກົດໝາຍ ພ້ອມທັງແກ້ໄຂຜົນຂອງການກວດກາໃຫ້ເຂັ້ມງວດ ແລະ ທັນເວລາ. ສຳລັບວຽກງານສາຍດ່ວນຂອງສະພາແຫ່ງຊາດ ກໍມີຄວາມສຳຄັນຫຼາຍ ໂດຍສະເພາະການປະຕິບັດພາລະບົດບາດເປັນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າເຊິ່ງຕ້ອງໄດ້ເກັບກຳ ແລະ ຮັບຟັງຄວາມຄິດເຫັນຂອງປະຊາຊົນ, ການຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ແມ່ນການສ່ອງແສງໃຫ້ເຫັນສະພາບດ້ານຜົນສຳເລັດໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງສະພາແຫ່ງຊາດເປັນຕົ້ນແມ່ນການປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ທັງຢູ່ສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ; ພ້ອມດຽວກັນນັ້ນ ກໍເຫັນໄດ້ເຖິງບັນຫາຂໍ້ຄົງຄ້າງທີ່ຕ້ອງໄດ້ຄົ້ນຄວ້າ, ພິຈາລະນາ ເພື່ອເປັນຂໍ້ມູນໃຫ້ແກ່ສະພາແຫ່ງຊາດ ໃນຖານະທີ່ເປັນອົງການນິຕິບັນຍັດ ມີພາລະບົດບາດໃນການພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍເພື່ອກຳນົດມາດຕະການແກ້ໄຂບັນຫາທີ່ເກີດຂຶ້ນໄດ້ທັນເວລາ. ນອກນັ້ນ, ບັນດາຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນທີ່ສົ່ງເຖິງສະພາແຫ່ງຊາດ ເປັນຂໍ້ມູນທີ່ສຳຄັນໃຫ້ແກ່ສະພາແຫ່ງຊາດ ເພື່ອຄົ້ນຄວ້າ, ກຳນົດເປັນຄຳຊັກຖາມມອບໃຫ້ກະຊວງ, ອົງການກ່ຽວຂ້ອງ ມາຊີ້ແຈງບັນຫາດັ່ງກ່າວຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະຄັ້ງ; ສະນັ້ນ, ການຮ່າງນິຕິກຳ ກໍເພື່ອກຳນົດວິທີການແກ້ໄຂບັນຫາທີ່ຮີບດ່ວນ, ເດືອດຮ້ອນຂອງສັງຄົມໃຫ້ໄດ້ຮັບການປັບປຸງແກ້ໄຂໄດ້ທັນເວລາ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີບົດກ່ຽວກັບຄວາມຈຳເປັນໃນການຮ່າງມະຕິວ່າດ້ວຍການກວດກາ ແລະ ຕ້ານການສໍ້ລາດບັງຫຼວງຂອງສະພາແຫ່ງຊາດ ແລະຜ່ານຮ່າງມະຕິດັ່ງກ່າວ, ລາຍງານໂດຍຫຍໍ້ການຈັດຕັ້ງປະຕິບັດວຽກງານສາຍດ່ວນໃນໄລຍະຜ່ານມາ ແລະ ຄວາມຈຳເປັນໃນການຮ່າງມະຕິ ແລະ ຄູ່ມືການເຄື່ອນໄຫວວຽກງານສາຍດ່ວນຂອງສະພາແຫ່ງຊາດ ແລະ ຜ່ານຮ່າງມະຕິແລະຄູ່ມືດັ່ງກ່າວ; ບັນດາຜູ້ແທນກອງປະຊຸມ ກໍໄດ້ສຸມສະຕິປັນຍາຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຢ່າງມີຈຸດສຸມ, ກະທັດຮັດ, ເລິກເຊິ່ງແລະຕິດແທດກັບຕົວຈິງ ເພື່ອເປັນຂໍ້ມູນໃຫ້ແກ່ຄະນະຮັບ ຜິດຊອບຮ່າງນິຕິກຳດັ່ງກ່າວ ນຳໄປຄົ້ນຄວ້າ, ປັບປຸງກະກຽມນຳເຂົ້າລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນທຶນຈາກອົງການເຮວີຕັດ (Helvetas) ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**



## ພົທ. ສຸວອນ...

(ຕໍ່ຈາກໜ້າ 1)

ບ່ອນ, ພາຍຫຼັງທ່ານ ຄຳຜ່ອງ ແສງສະຫວ່າງ ສສຊ ປະຈຳເຂດເລືອກຕັ້ງທີ 1, ຮອງປະທານຄະນະກຳມະການຍຸຕິທຳແລະປກຊ-ປກສ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສປນວ ຊຸດທີ II ແລະ ທ່ານ ລຳໄມ ກູດລາວົງ ສສຊ ປະຈຳເຂດເລືອກຕັ້ງທີ 10, ຮອງປະທານສະພາປະຊາຊົນແຂວງ (ສພຂ) ວຽງຈັນ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຂ ວຽງຈັນ ຊຸດທີ II. ທ່ານ ພົທ. ສຸວອນ ເລືອງບຸນມີ ກໍໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ດຳເນີນແຕ່ວັນທີ 10 ມິຖຸນາ ຫາ 02 ກໍລະກົດ 2024 ລວມ 17 ວັນ ໄດ້ພິຈາລະນາ, ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ເຊິ່ງບັນດາເນື້ອໃນສຳຄັນທີ່ນຳເອົາເຂົ້າຜ່ານຮັບຮອງໃນກອງປະຊຸມຄັ້ງນີ້ ລວມມີ 3 ພາກ (3 ຂົງເຂດວຽກງານ) ຄື: ວຽກງານຂອງລັດຖະບານ, ວຽກງານຂອງອົງການກວດສອບແຫ່ງລັດ ແລະ ວຽກງານຂອງສະພາແຫ່ງຊາດ ໂດຍອອກເປັນມະຕິ 6 ສະບັບ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ 13 ສະບັບ ໃນນີ້, ກົດໝາຍສ້າງໃໝ່ 2 ສະບັບຄື: ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ ແລະ ຮ່າງກົດໝາຍວ່າດ້ວຍສະຫະກອນ; ກົດໝາຍປັບປຸງ 11 ສະບັບຄື: 1) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອັດຈ໌ໄອວີ/ພະຍາດເອດ, 2) ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, 3) ກົດໝາຍວ່າດ້ວຍການຕ້ານສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, 4) ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, 5) ກົດໝາຍວ່າດ້ວຍການທ່ອງທ່ຽວ, 6) ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, 7) ກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານອັກຄີໄພ, 8.) ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, 9) ກົດໝາຍວ່າດ້ວຍສະພາແຫ່ງຊາດ, 10) ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, 11) ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ວຽກງານສະພາແຫ່ງຊາດ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 6 ຫາເທື່ອທີ 7 ແລະ ແຜນການເຄື່ອນໄຫວຮອດກອງປະຊຸມສະໄໝສາມັນເທື່ອທີ 8. ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມອີກວ່າ ການເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງ ສພຊ ຊຸດທີ IX ໄດ້ສະແດງໃຫ້ເຫັນສະພາບຄວາມເປັນຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 6 ເດືອນຕົ້ນປີ ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ ອັນເນື່ອງມາຈາກຜົນກະທົບຈາກປັດໄຈພາຍນອກ ແລະ ພາຍໃນ ຕົ້ນຕໍແມ່ນມາຈາກປັດໄຈພາຍໃນຂອງພວກເຮົາເອງ; ມະຕິເລກທີ 137/ສພຊ, ລົງວັນທີ 02/7/2024 ທັງມີລັກສະນະເປັນນິຕິກຳ ທັງມີລັກສະນະຮຽກຮ້ອງໃຫ້ລັດຖະບານສືບຕໍ່ຕັ້ງໜ້າ, ອອກແຮງຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດໃຫ້ບຸກທະລຸແຂງແຮງກວ່າເກົ່າ ໂດຍປຸກລະດົມກຳລັງແຮງຂອງທົ່ວປວງຊົນເຂົ້າຮ່ວມ, ເຮັດໃຫ້ບັນຫາເດືອດຮ້ອນທີ່ເປັນສິ່ງທ້າທາຍໜັກໜ່ວງ ໄດ້ຮັບການແກ້ໄຂຄ່ອຍໆກັບຄືນສູ່ສະພາບປົກກະຕິ. ຫຼັງຈາກນັ້ນ ໄດ້ຮັບຟັງບັນຫາ, ຂໍ້ສະເໜີ, ຄວາມຂັດຂ້ອງໝອງໃຈຈາກນາຍ-ພົນທະຫານ ແລະ ຕຳຫຼວດ ເຊິ່ງບາງບັນຫາກໍໄດ້ຕອບກັບທີ່, ສ່ວນບັນຫາທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ກໍຈະນຳໄປສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງແກ້ໄຂໃນໂອກາດຕໍ່ໄປ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ຕີລາຄາສູງຕໍ່ການປະກອບສ່ວນໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຕະຫຼອດມາ ພ້ອມທັງເນັ້ນໜັກ ແລະໃຫ້ທິດຊີ້ນຳຄະນະພັກ-ຄະນະນຳ ກໍຄືນາຍ-ພົນທະຫານ ແລະ ຕຳຫຼວດ ຈົ່ງພ້ອມກັນຮັກສາຄວາມສາມັກຄີຮັກແພງເຊິ່ງກັນແລະກັນ, ຮັກສາສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ຕ້ານປາກົດການຫຍໍ້ທໍ້ຕ່າງໆທີ່ຈະເກີດຂຶ້ນ, ເອົາໃຈໃສ່ສ້າງເສດຖະກິດກົມກອງ ກໍຄືຄອບຄົວມີຄວາມເຂັ້ມແຂງເພື່ອເຮັດໃຫ້ຊີວິດການເປັນຢູ່ນັບມື້ດີຂຶ້ນເປັນກ້າວໆ.

**(ນາງ ອາລິນ ສຸພົມມະປະດິດ)**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍເປັນຕົ້ນ: ໜັງສືສະເໜີຂອງລັດຖະບານ ກ່ຽວກັບການດັດແກ້ສັນຍາສຳປະທານໂຄງການເຂື່ອນໄຟຟ້າດອນສະໂຮງ; ໜັງສືສະເໜີຂອງລັດຖະບານ ກ່ຽວກັບການຍົກເວັ້ນການຄິດໄລ່ອາກອນລາຍໄດ້ສຳລັບການເພີ່ມເງິນອຸດໜູນຄ່າຄອງຊີບໃຫ້ແກ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ຜູ້ເສຍອົງຄະ; ຮ່າງແຜນຈັດສັນງົບປະມານການລົງທຶນຂອງລັດປະຈຳປີ 2025; ໜັງສືສະເໜີຂອງຄະນະປະຈຳສະພາປະຊາຊົນນະຄອນຫຼວງວຽງຈັນ ກ່ຽວກັບການຂໍໃຫ້ປຶກສາຫາລືຮ່ວມກັບລັດຖະບານ ໃນການພິຈາລະນາທົບທວນການອະນຸມັດສຳຫຼວດ, ຂຸດຄົ້ນ ແລະ ຂຸດຄົ້ນແຮ່ເກືອແຮ່ໂປຕາສ ຢູ່ນະຄອນຫຼວງວຽງຈັນ. ນອກຈາກນີ້, ຍັງໄດ້ຮັບຟັງການລາຍງານຜົນການຮຽບຮຽງເນື້ອໃນກົດໝາຍຂົງເຂດສະພາແຫ່ງຊາດ 3 ສະບັບຄື: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ລາຍງານຄືນຜົນການປັບປຸງເນື້ອໃນຂອງຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ; ລາຍງານຄວາມຄືບໜ້າດ້ານຕ່າງໆໃນການກະກຽມເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ແລະ ກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ຜູ້ນຳໄອປາ ພ້ອມທັງທິດທາງແຜນການວຽກງານໃນຕໍ່ໜ້າ; ພິຈາລະນາຄຳຮ້ອງຂໍຄວາມເປັນທຳ 3 ເລື່ອງ.

**(ຂ່າວ: ນາງ ກຸກກິກ ບຸດດາໄຊ, ພາບ: ສອນສັກ ວັນວິໄຊ)**




# ຊອກຮູ້ຄອງ 14

# ດົ້ນກົບເມກ

ເວົ້າເຖິງຮີດ 12 ຄື: ບຸນປະເພນີຂອງຄົນລາວ 12 ເດືອນ ແຕ່ສຳລັບຄອງ 14 ຂໍ້ນັ້ນ ອາດແບ່ງເປັນຫຼາຍປະເພດຄື: ຄອງສຳລັບປະຊາຊົນທົ່ວໄປຕ້ອງປະຕິບັດ ແລະ ມັນກໍບໍ່ແມ່ນປາງບຸນຫຼິ້ນກິນເຫຼົ້າເບຍ ແຕ່ມັນຄືຮີດຄອງ ດີງາມ 14 ຂໍ້ທີ່ຄວນສຶກສາຮຽນຮູ້ໃຫ້ເຂົ້າໃຈເຖິງແກ່ນແທ້ ແຍກແຍະໃຫ້ອອກ ປັບປະຍຸກໃຊ້ໃຫ້ເປັນ ເຂົາຈຶ່ງເອີ້ນ ວ່າຄົນສະຫຼາດ, ບ້ານເຮົາເຖິງຈະມີນະໂຍບາຍສ້າງສັງຄົມແຫ່ງການຮຽນຮູ້ ແຕ່ຜູ້ຂຽນສັງເກດເບິ່ງພໍ່ແມ່ຜູ້ປົກຄອງສ່ວນໃຫຍ່ບໍ່ສຶກສາຄົ້ນຄວ້າ ເຊິ່ງບໍ່ໄດ້ເປັນແບບຢ່າງໃຫ້ລູກຫຼານຊໍ້າ !

ເມື່ອບໍ່ອ່ານກໍບໍ່ຮູ້ ບາງຄົນບໍ່ຮູ້ກໍບອກວ່າບໍ່ມີ ເພາະບໍ່ເຫັນບໍ່ຮູ້ ເຊິ່ງເປັນຄຳຕອບທີ່ຕັດທາງສູ່ປັນຍາ: ຄອງ 14 ນັ້ນເລີ່ມຕົ້ນ 1. ຄົນລາວເຮັດກະເສດປູກຝັງ ເມື່ອໄດ້ຜົນປູກໝາກໄມ້ ຫືວມັນເຂົ້າເໜົ້າ ເຂົ້າຮາງ ແມ່ນມັກເຮັດບຸນຖວາຍທານແກ່ພະສົງກ່ອນ, 2. ຢ່າໂລບລ່າຍຕາຊັງ ຢ່າຈ່າຍເງິນແດງແປງເງິນຄວ້າງ, ຢ່າກ່າວຄຳຫຍາບຊ້າກ້າແຂງໃສ່ກັນ (ຂໍໃຫ້ຄິດພິຈາລະນານຳກັນວ່າເພິ່ນສອນດີພຽງດີບໍ່ໃຫ້ຄົນໂກງ), 3. ໃຫ້ພ້ອມພາກັນເຮັດເຮັດຮົ້ວວັດສ້າງກຳແພງອ້ອມບ້ານເຮືອນນີ້ບອກເຖິງໃຫ້ຮູ້ຈັກປົກປັກຮັກສາຜືນແຜ່ນດິນຂອງຕົນ, 4. ເມື່ອຈະຂຶ້ນເຮືອນເວລາກັບມາແຕ່ເຮັດວຽກ ໃຫ້ລ້າງຕີນສະອາດ ນີ້ກໍສອນໃຫ້ຮູ້ຈັກຢູ່ກິນສະອາດ, 5. ເມື່ອເຖິງວັນສິນນ້ອຍ-ສິນໃຫຍ່ ໃຫ້ຮູ້ຈັກສົມມາແມ່ຄີໄຟ, ແມ່ຂັ້ນໄດ-ປະຕູເຮືອນ ທີ່ຕົນໄດ້ອາໄສຢູ່, ນີ້ກໍສອນໃຫ້ຮູ້ຈັກເຄົາລົບ-ກະຕັນຍູ, 6. ເມື່ອຈະເຂົ້ານອນໃຫ້ຮູ້ຈັກລ້າງຕີນໃຫ້ສະອາດ, 7. ເຖິງວັນສິນໃຫ້ຮູ້ຈັກເອົາດອກໄມ້ສົມມາເຈົ້າໂຄດລຸງຕາ-ສອນໃຫ້ ຮູ້ຈັກເຄົາລົບຜູ້ໃຫຍ່, 8. ເຖິງວັນສິນໃຫ້ຮູ້ຈັກຖວາຍທານແກ່ພະສົງ, 9. ເມື່ອພະສົງມາບິນທະບາດ ກໍໃຫ້ຮູ້ຈັກຖວາຍທານ, 10. ເມື່ອພົກຊຸອອກຈາກປະລິວາດສະກຳໃຫ້ຮູ້ຈັກແຕ່ງຂັນດອກໄມ້ບູຊາ.

ສ່ວນຄອງສິບສີ່ ຂໍ້ທີ 11. ເມື່ອເຫັນພະສົງໃຫ້ເຄົາລົບຈຶ່ງຄ່ອຍເຈລະຈາ, 12. ບໍ່ຢຽບເງົາພົກຊຸ, 13.ຢ່າເອົາອາຫານເງື່ອນຖວາຍພະສົງ ແລະ 14. ຢ່າເສບກາມມະຄຸນໃນວັນສິນ; ຄອງ 14 ຂໍ້ນີ້ ດີບໍ່ດີອັນໃດ ກໍລອງພິຈາລະນານຳກັນມັນເປັນຂອງບູຮານ, ເປັນພູມປັນຍາ, ເປັນເອກະລັກຈິດວິນຍານວັດທະນະທຳ.






# ລຸ້ນ

"ໄວລຸ້ນປັດຈຸບັນ ມັກເຮັດແຕ່ແນວແປກໆເວີຍ!" ຊາຍໄວກາງຄົນເວົ້າກັບຄູ່ສົນທະນາດ້ວຍຄວາມເມື່ອຍໃຈ.

"ພວກລຸ້ນອ້າຍຈັ່ງແມ່ນເຂົາສະບາຍບໍ່ເສັ່ງຍາກຄືລຸ້ນພວກເຮົາ" ຍິງສາວໄວສິບເຈັດກ່າວກັບໝູ່ທີ່ນັ່ງຄຽງຂ້າງຢ່າງອາລົມເສຍ ເມື່ອເຫັນແຜນການເສັງຈົບຊັ້ນທີ່ທາງຄູປະຈຳຫ້ອງມາເຜີຍແຜ່.

"ຢາກໄດ້ລຸ້ນໃດນໍ, ອ້າຍ ?" ສຽງຫວານໆຂອງຜູ້ຂາຍໃນຮ້ານຂາຍໂທລະສັບມືຖືຖາມລູກຄ້າທີ່ພວມຊອກຫາມືຖືທີ່ຖືກໃຈ.

"ເຈົ້າຊິລຸ້ນທີມໃດ ລະຫວ່າງທີມຊາດແອັສປາຍກັບທີມຊາດເຢຍລະມັນ?" ນັກເຊຍບານເຈົ້າເກົ່າເວົ້າກັບໝູ່ຂອງລາວ.

"ໂຕບໍ່ຢາກລຸ້ນໂຊກນຳເຂົາຫວາ?" ຊາຍໜຸ່ມງວາກໜ້າຖາມໝູ່ທີ່ຢູ່ທາງຂ້າງພ້ອມກັບເລືອກໃບຫວຍທີ່ວາງຢູ່ຕໍ່ໜ້າ.

ຈາກຄຳເວົ້າຄຳວ່າທີ່ຍົກມາຂ້າງເທິງ ເຮົາຈະເຫັນໄດ້ວ່າ ຄຳວ່າ "ລຸ້ນ" ໄດ້ຖືກນຳໃຊ້ຢູ່ໃນຫຼາຍຄວາມໝາຍດັ່ງນີ້:

ລຸ້ນ 1 ໃຊ້ໃນຄວາມໝາຍ "ຮຸ່ນ" ໄວຢ່າງເຂົ້າສູ່ໄວບ່າວສາວ
ລຸ້ນ 2 ໃຊ້ໃນຄວາມໝາຍ "ຮຸ່ນ" ສະໄໝຂອງຄົນທີ່ກຳນົດເປັນໄລຍະ
ລຸ້ນ 3 ໃຊ້ໃນຄວາມໝາຍ "ຮຸ່ນ" ສະໄໝຂອງສິ່ງຂອງທີ່ກຳນົດເປັນໄລຍະ
ລຸ້ນ 4 ໃຊ້ໃນຄວາມໝາຍ "ເອົາໃຈຊ່ອຍ"
ລຸ້ນ 5 ໃຊ້ໃນຄວາມໝາຍ "ສ່ຽງ"

ຫາກພວກເຮົາເປີດວັດຈະນານຸກົມພາສາລາວແຕ່ລະເຫຼັ້ມເບິ່ງກໍບໍ່ສູ້ເຫັນຄຳວ່າ "ລຸ້ນ" ມີແຕ່ຄຳວ່າ "ຮຸ່ນ" (ຍົກເວັ້ນແຕ່ໃນວັດຈະນານຸກົມພາສາລາວຂອງສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ທີ່ໄດ້ບັນຈຸຄຳວ່າ ໄວລຸ້ນ ໃສ່). ໃນເວລາເວົ້າ ເກືອບຮ້ອຍສ່ວນຮ້ອຍກໍອອກສຽງຄຳນີ້ວ່າ "ລຸ້ນ". ແຕ່ເວລາຂຽນເປັນລາຍຫຼັກອັກສອນ ໃນຂໍ້ 1-3 ສ່ວນຫຼາຍມັກຈະຂຽນເປັນ "ຮຸ່ນ" ເພື່ອໃຫ້ຖືກຕາມຄວາມໝາຍທີ່ມີໃນວັດຈະນານຸກົມ.

ສ່ວນໃນຂໍ້ 4-5 ນັ້ນ ຖືວ່າແມ່ນຄຳພ້ອມສຽງ "ລຸ້ນ" ທີ່ມີຄວາມໝາຍແຕກຕ່າງເຊິ່ງຫາກໍຖືກນຳເຂົ້າມາໃສ່ໃນສຳນວນຄຳເວົ້າຂອງລາວເຮົາເມື່ອປະມານຊາວປີມານີ້ເອງ. ຄວາມຈິງແລ້ວ ຄຳວ່າ "ລຸ້ນ" ໃນຄວາມໝາຍວ່າ "ເອົາໃຈຊ່ອຍ" ແມ່ນມາຈາກພາສາຈີນແຕ້ຈິ໋ວ ເຊິ່ງສື່ມວນຊົນຝ່າຍກິລາໄທໄດ້ນຳມາໃຊ້; ຈາກນັ້ນ "ລຸ້ນ" ກໍຖືກນຳມາໃຊ້ເຂົ້າໃນວົງການໂຄສະນາທຸລະກິດ ເຮັດໃຫ້ຄຳນີ້ມີຄວາມໝາຍກາຍເປັນ "ສ່ຽງ" ໃນທີ່ສຸດ. ຍ້ອນອິດທິພົນທາງສື່ໜັງສືພິມ ແລະໂທລະພາບປະເທດເພື່ອນບ້ານ ເຮັດໃຫ້ບັນດາສື່ມວນຊົນລາວ ໄດ້ຮັບຜົນກະທົບ ຄຳວ່າ "ລຸ້ນ" ໃນຄວາມໝາຍ "ເອົາໃຈຊ່ອຍ" ແລະ "ສ່ຽງ" ກໍແຜ່ກະຈາຍໄປທົ່ວທຸກການໂຄສະນາທັງທາງໜ້າໜັງສືພິມ, ວາລະສານ ຕະຫຼອດຮອດວິທະຍຸ-ໂທລະພາບ...

ປັດຈຸບັນນີ້ ຄຳວ່າ "ສ່ຽງໂຊກ" ໄດ້ຄ່ອຍໆຕາຍໄປ ໂດຍການເຂົ້າມາແທນທີ່ຂອງຄຳວ່າ "ລຸ້ນໂຊກ".




# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ເມື່ອປະຊາຊົນພ້ອມໃຈນຳແລ້ວ ວຽກການຫຍັງກໍເຮັດໄດ້ໝົດທຸກຢ່າງ. ເມື່ອປະຊາຊົນບໍ່ພ້ອມໃຈນຳແລ້ວ ວຽກການຫຍັງກໍເຮັດບໍ່ສຳເລັດ. ການເຮັດວຽກນຳປະຊາຊົນນີ້ມີ 2 ວິທີຄື:

1. ເຮັດວຽກຕາມແບບອາດຍາ. ອັນໃດກໍໃຊ້ແຕ່ຄຳສັ່ງບັງຄັບປະຊາຊົນເຮັດ, ອັດປະຕູແລ້ວວາງແຜນການຢູ່ໃນຫ້ອງ, ຂຽນແຜນການແລ້ວເອົາໄປຜູກໃສ່ຄໍປະຊາຊົນ ແລະ ບັງຄັບປະຊາຊົນເຮັດນຳ.

ພະນັກງານຫຼາຍຄົນເຮັດວຽກຕາມແບບນັ້ນ. ເຂົາຍັງເວົ້າອວດຕົວຕາມແບບນັ້ນ ເຂົາຍັງເຮັດລ້ອນໜ້າທີ່ເຮັດໄດ້ໄວ ບໍ່ມີເລື່ອງວຸ່ນວາຍ. ເຂົາລືມເສຍວ່າພັກເຮົາ ແລະ ລັດຖະບານເຮົາເຮັດວຽກເຮັດການແມ່ນເຮັດໃຫ້ປະຊາຊົນ, ວຽກການຫຍັງກໍແມ່ນເຮັດເພື່ອຜົນປະໂຫຍດຂອງປະຊາຊົນ, ເຮັດຕາມແບບອາດຍາແນວນັ້ນປະຊາຊົນບໍ່ພໍໃຈ, ເມື່ອປະຊາຊົນບໍ່ພໍໃຈແລ້ວແມ່ນວ່າໃນຊົ່ວຄາວຈະມີຜົນສຳເລັດແນວໃດກໍຕາມ, ເມື່ອເວົ້າເຖິງທາງດ້ານການເມືອງແລ້ວແມ່ນເປັນການປະລາໄຊ.

ອ່ານຕໍ່ສະບັບໜ້າ...



# ຂຽນຄໍາລາວໃຫ້ຖືກ

\# ຄູແສງ

| ຖືກ | ຜິດ |
|---|---|
| ສາຍແອວ | ~~ຊາຍແອວ~~ |
| ຊາຍແດນ | ~~ສາຍແດນ~~ |
| ເຂັດຫຼາບ | ~~ເຂັດລາບ~~ |
| ໂຊກລາບ | ~~ໂຊກຫຼາບ~~ |
| ຊັບພະຍາກອນ | ~~ສັບພະຍາກອນ~~ |
| ສັບສຳນວນ | ~~ຊັບສຳນວນ~~ |
| ບັງຄັບ | ~~ບັງຂັບ~~ |
| ຄົນຂັບລົດ | ~~ຄົນຄັບລົດ~~ |
| ອະນາຄົດ | ~~ອານາຄົດ~~ |
| ອານາຈັກ | ~~ອະນາຈັກ~~ |



## ສຸກສະບາຍທາຍໂລດ

# ຜັກດິບທີ່ບໍ່ຄວນບໍລິໂພກ

ໂດຍ: ທິວກະທິ



ຜັກທີ່ເຮົາກິນກັນຢູ່ທຸກມື້ນີ້ ມີບາງຊະນິດບໍ່ຄວນກິນຕອນດິບໆໃນປະລິມານຫຼາຍ ເພາະອາດຈະສົ່ງຜົນກະທົບຕໍ່ສຸຂະພາບເຮົາໄດ້ ບາງຊະນິດຫາກກິນຕອນຍັງດິບ ອາດມີຜົນຕໍ່ຮ່າງກາຍຫຼາຍກວ່າທີ່ເຮົາຄິດ ເຊິ່ງມີດັ່ງລຸ່ມນີ້:

**1. ກະຫຼ່ຳປີ, ກະຫຼ່ຳປີດອກ ແລະ ບ໋ອກໂຄຣີ** ເພາະຜັກເຫຼົ່ານີ້ມີສານກອຍໂຕເຈນ ເຊິ່ງໄປຂັດຂວາງການເຮັດວຽກຂອງຕ່ອມໄທຣອຍ (thyroid) ໃນການດັກຈັບໄອໂອດີນ ເຊິ່ງອາດເຮັດໃຫ້ມີໂອກາດເປັນພະຍາດໄທຣອຍ ຫຼື ຄໍພອກຽງກິນເລືອດໄດ້;

**2. ໝາກຖົ່ວຍາວ** ຍິ່ງເປັນຖົ່ວດິບແລ້ວຈະມີກາສຄ່ອນຂ້າງຫຼາຍ ໂດຍສະເພາະກາສຄາບອນໄດອອກຊາຍ (Carbondioxide) ເຊິ່ງເຮັດໃຫ້ມີອາການທ້ອງອືດ;

**3. ຖົ່ວງອກ** ທີ່ຫຼາຍຄົນມັກໃສ່ເຝີ, ລາບ ຫຼື ເຂົ້າປຸ້ນ ໃນຖົ່ວງອກດິບມີສານຜິດທຳມະຊາດຊື່ໄຟເຕດ (Phytate) ສານຕົວນີ້ຈະໄປຈັບແຮ່ທາດບາງຊະນິດຢູ່ໃນອາຫານ ເຮັດໃຫ້ຮ່າງກາຍບໍ່ສາມາດດູດຊຶມແຮ່ທາດເຫຼົ່ານັ້ນເຂົ້າສູ່ຮ່າງກາຍ ຈະເຮັດໃຫ້ເປັນໂຣກຂາດແຮ່ທາດ ແຕ່ສານໄຟເຕດຈະຖືກທຳລາຍ ໂດຍການຕົ້ມ ຫຼື ປຸງແຕ່ງໃຫ້ສຸກ;

**4. ຜັກຫົມ** ບໍ່ຄວນກິນດິບ ເພາະກົດໃນຜັກຫົມຈະຂັດຂວາງການດູດຊຶມທາດເຫຼັກ;

**5. ໜໍ່ໄມ້ ແລະ ມັນຕົ້ນ** ມີສານໄຊຢາໄນສູງ ມີຜົນຕໍ່ລະບົບປະສາດ ເຮັດໃຫ້ມຶນງົງໄດ້ ຜູ້ບໍລິໂພກຄວນນຳໄປຕົ້ມຫຼາຍນ້ຳ ກ່ອນນຳໄປປຸງອາຫານ.

**ຂໍ້ມູນຈາກ:**
**www.laopost.com**





## ຫັກຫາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສ້ຽມຫ້ຽນ

✳ **ຜ່ານ**ພົ້ນໄປສຳລັບກອງປະຊຸມເຝິກອົບຮົມອຽກງານສື່ມວນຊົນ ໃນຫົວຂໍ້ **"ບົດຮຽນຊຽນຂ່າວການຕອບໂຕ້ຖ້ອຍຄຳນອງບິດເບືອນຂອງຄົນບໍ່ດີໃນສື່ອອນລາຍ; ການບັນນາທິການດ້ານເນື້ອໃນ ແລະ ເຕັກນິກການຖ່າຍພາບນິ່ງ-ວິດີໂອ"** ໃຫ້ແກ່ນັກຂ່າວ ສພຊ ທົ່ວປະເທດ ເຊິ່ງຈັດຂຶ້ນທີ່ເຂດ 10 ເມືອງວັງວຽງ ເຮັດໃຫ້ມີໂອກາດພົບພໍ້ນັກຂ່າວ **ສພຊ 18 ເຂດເລືອກຕັ້ງ**ຫຼັງຈາກທີ່ໄດ້ຍິນຊື່ສຽງຮຽງນາມກັນມາແຕ່ດົນນານ ຊາດວ່າຄັກກະດ້ ບໍ່ນັກຂ່າວຂອງສະພາ ມາເຕົ້າໂຮມຮວມກັນ ທົ່ວເໜືອກາງໃຕ້ ໃຜກໍໃສ່ພາດ້ອຍ ກິລິຍາອາດຄ່ອງ ທັງຜົນງານກໍເດັ່ນກ້ອງ ປະຈັກແຈ້ງເດັ່ນດັງ ຟັງຍິນຮັບຮູ້ ວ່າມີການຮ່ວມກິດຈະກຳ ຮັບແລ່ນໂຍນບານເຕະ ແລ່ງໃນສະໜາມກວ້າງ ອັນນັ້ນ**ທີມແດງ**ໄດ້ ບານມາ**ໜຶ່ງໜ່ວຍ** ສ່ວນອີກທີມວ່າຊ້ານ...! ຄະແນນຫ່າງແຕ້ມ ປະມານໄດ້ 8 ໜ່ວຍບານ **ວ່າເດ!**

✳ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ອອກແຈ້ງການເຕືອນ**ໄພນ້ຳຖ້ວມ**ຫຼາຍເມືອງໃນທົ່ວປະເທດ ສາເຫດຍ້ອນນ້ຳຂອງ ແລະ ສາຂາເພີ່ມຂຶ້ນຫຼາຍ ຍິ່ງຮອດເຂດອັນຕະລາຍ ເພິ່ນຈຶ່ງໄດ້ປະກາດແຈ້ງ ເຕືອນບອກລະວັງໄພ ໃຫ້ເບິ່ງແຍງອາຄານ ພາທັງສັດລ້ຽງ ພ້ອມທັງມີສະຕິຕັ້ງ ລະວັງໄພທຸກຢ່າງ ຮັກສາຂອງເຄື່ອງໃຊ້ ຊີວິດພ້ອມຊັບສິນ **ພີ່ນ້ອງເອີຍ!**

## ອາດ ກະວີລາວ

# ນ້ຳຖ້ວມທາງ

# ໂອທອງ ຄຳອິນຊູ

✳ ຝົນຕົກລົມຫຼັ່ງເລື້ອຍ ໄຫຼລວດທາງຫຽວ
ນ້ຳອັ່ງໂຮມເປັນວັງ ຍາກເຫຍີງຍາມຍ້າຍ
ໃຜກໍໂອຍໂອຍເວົ້າ ຄຳເຄືອງຄືຄຽດ
ຕິແຕ່ທາງທີ່ສ້າງ ດູດ້ອຍມາດຖານ

✳ ສັ່ງບໍ່ແນມເບິ່ງເບື້ອງ ຮູທໍ່ແຄມທາງ
ຂີ້ເຫຍື້ອຫຼາຍອັນອັດ ໂອບເອົາອີມອັ້ນ
ໃຜນໍເປັນຄົນຖິ້ມ ໂລເລເລີຍອັ່ງ
ພໍຝົນເທຖອກເທົ້ງ ໄຫຼປ້ານປ່ອງລະບາຍ

✳ ເບິ່ງແມບາງບ່ອນເບື້ອງ ຄອງເປີດແຄມທາງ
ໃຜນໍເປັນຄົນວາງ ທໍ່ຖົມຍາວເຍີ້ນ
ແຕ່ບໍ່ແປງຮູໃຫ້ ໄຫຼລົງເຖິງທໍ່
ນ້ຳຈຶ່ງຂັງອໍອັ່ງຖ້ວມ ຄາຄ້າງຢູ່ເທິງ

✳ ເປັນນຳໃຜທ່ຽງແທ້ ທາງຍາກຍາມຝົນ
ຢ່າຕູ່ໄປໂລເລ ໃສ່ຊຸມແປງສ້າງ
ແຕ່ວ່າເປັນໄປໄດ້ ຄືຄຳຕວງຕູ່
ຄົນວ່າຄົນທີ່ສ້າງ ຫວັງໄດ້ແຕ່ເງິນ.




## ຊອບຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ໃຊ້ຄຳສັບ

ມື້ໜຶ່ງ ໃນຫ້ອງຮຽນ ນາຍຄູໄດ້ສອນບົດຮຽນໃຫ້ນັກຮຽນກ່ຽວກັບກາລະ ແລ້ວມອບບົດເຝິກຫັດໃຫ້ນັກຮຽນ ຮຽນແຕ່ງປະໂຫຍກທີ່ໃຊ້ຄຳວ່າ **"ກິນ"**

ສົມສີ ຍົກມືຂຶ້ນແລ້ວເວົ້າວ່າ: ຄອບຄົວຂ້ອຍໄປຫຼິ້ນຢູ່ສວນ ຂ້ອຍໄດ້ກິນໝາກສີດາ ມັນແຊບຫຼາຍ

"ຊົມເຊີຍ ແຕ່ຂ້ອຍໃຫ້ໃຊ້ຄຳວ່າ ກິນ ບໍ່ແມ່ນ ໄດ້ກິນ" ນາຍຄູເວົ້າ

ທ້າວ ສາລີ ຍົກມືຂຶ້ນ ແລະ ເວົ້າວ່າ: ຂ້ອຍເຄີຍໄປສວນພໍ່ຕູ້ ແລະ ເຄີຍໄດ້ກິນໝາກໂມ

"ດີຫຼາຍສາລີ ແຕ່ຍັງບໍ່ທັນຖືກ"

ສົມຍົດ ຍົກມືຂຶ້ນ ແຕ່ນາຍຄູມີຄວາມລັງເລໃຈເລັກນ້ອຍ ເພາະເປັນເດັກທີ່ສະຫຼອກກອກ ແຕ່ກໍຕັດສິນໃຈໃຫ້ຕອບ ເພາະບໍ່ມີທາງທີ່ສົມຍົດຈະຕອບຖືກ

"ປ້າຂອງຂ້ອຍຢາກກິນເຜືອກ ແຕ່ລາວບໍ່ມີແຂ້ວ ລາວຈຶ່ງໃຊ້ເຫືອກກັດກິນແທນ"

## ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າຮ່ວມວົງ ກັບຄົນມັກຈັບຜິດ
ຢ່າຜູກມິດ ກັບຄົນເວົ້າບໍ່ດີ
ຢ່າຄຸກຄີ ກັບຄົນຂີ້ອິດສາ
ຢ່າຄົບຫາ ກັບຄົນແລ້ງນ້ຳໃຈ
ຢ່າຢູ່ໃກ້ ຄົນເຫັນແກ່ໂຕ

ລັດຖະສະພາຕ່າງປະເທດ

# ປະທານາທິບໍດີອາຟຣິກາໃຕ້ ລົງນາມຮ່າງກົດໝາຍໄຟຟ້າ



ທ່ານ ໄຊຣິວ ຣາມາໂຟຊາ (Cyril Ramaphosa) ປະທານາທິບໍດີອາຟຣິກາໃຕ້ ໄດ້ລົງນາມໃນຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍລະບຽບການໄຟຟ້າ (Electricity Regulation Amendment Act) ເມື່ອວັນສຸກທີ 16 ສິງຫາຜ່ານມາ, ເປັນການເປີດທາງໃຫ້ມີການປະຕິຮູບທີ່ສຳຄັນໃນຂະແໜງພະລັງງານຂອງປະເທດ; ກົດໝາຍສະບັບນີ້ ມີຈຸດປະສົງເພື່ອແກ້ໄຂບັນດາສິ່ງທ້າທາຍຂອງການຂາດໄຟຟ້າໃນໄລຍະຍາວຂອງປະເທດ ໂດຍການປະຕິຮູບຢ່າງກວ້າງຂວາງ, ລວມທັງການສ້າງຕະຫຼາດໄຟຟ້າທີ່ມີການແຂ່ງຂັນ.

ຮ່າງກົດໝາຍທີ່ເຫັນດີໂດຍປະທານາທິບໍດີ ໄດ້ປັບປຸງກົດໝາຍວ່າດ້ວຍລະບຽບການໄຟຟ້າ ສະບັບປີ 2006 ເພື່ອຕອບສະໜອງກັບສະພາບຕົວຈິງໃນປັດຈຸບັນຂອງຂະແໜງໄຟຟ້າ, ເປີດທາງສູ່ການແຂ່ງຂັນທີ່ຫຼາຍຂຶ້ນ ແລະ ຫຼຸດຜ່ອນຕົ້ນທຶນດ້ານພະລັງງານ; ເພີ່ມການລົງທຶນໃນກຳລັງການຜະລິດໄຟຟ້າໃໝ່ ເພື່ອບັນລຸຄວາມໝັ້ນຄົງດ້ານພະລັງງານ; ສ້າງຕັ້ງບໍລິສັດສາຍສົ່ງເອກະລາດ ເປັນຜູ້ຄຸ້ມຄອງຕາຂ່າຍໄຟຟ້າແຫ່ງຊາດ; ວາງມາດຕະການລົງໂທດຢ່າງເຂັ້ມງວດຕໍ່ຄວາມເສຍຫາຍ ແລະ ການທຳລາຍພື້ນຖານໂຄງລ່າງ.

ຮ່າງກົດໝາຍດັ່ງກ່າວໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດ (ສະພາຕ່ຳ) ເມື່ອເດືອນມີນາຜ່ານມາ. ຕາມທີ່ປະທານາທິບໍດີໄດ້ກ່າວໄວ້, ການລົງນາມຂອງຕົນໄດ້ມີຂຶ້ນໃນຂະນະທີ່ອາຟຣິກາໃຕ້ໄດ້ສະແດງໃຫ້ເຫັນການປັບປຸງສະຖຽນລະພາບການສະໜອງພະລັງງານໃນໄລຍະສີ່ເດືອນທີ່ຜ່ານມາ, ດ້ວຍການຫຼຸດຜ່ອນໄຟຟ້າດັບເປັນໄລຍະໆ.

ໃນຖະແຫຼງການປະທານາທິບໍດີ ໄດ້ອະທິບາຍວ່າ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍລະບຽບການໄຟຟ້າ ມີຈຸດປະສົງເພື່ອແກ້ໄຂບັນຫາພະລັງງານຂອງປະເທດໃນປັດຈຸບັນ ໂດຍນຳສະເໜີການແຂ່ງຂັນ ແລະ ການມີສ່ວນຮ່ວມຂອງພາກເອກະຊົນ.

ຮ່າງກົດໝາຍດັ່ງກ່າວຈະນຳໄປສູ່ການສ້າງຕັ້ງບໍລິສັດສາຍສົ່ງເອກະລາດ ເຊິ່ງມີອຳນາດທີ່ຈະກຳນົດການລົງໂທດທີ່ເຂັ້ມງວດສຳລັບຄວາມເສຍຫາຍແລະການທຳລາຍພື້ນຖານໂຄງລ່າງ ແລະ ການລ່ວງລະເມີດ. "ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍລະບຽບການໄຟຟ້າ ກຳນົດໃຫ້ມີການສ້າງຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຜູ້ດຳເນີນທຸລະກິດລະບົບສາຍສົ່ງ (Transmission System Operator SOC Ltd) ຫຼື TSO ເຊິ່ງຕ້ອງໄດ້ຮັບການສ້າງຕັ້ງເປັນຫົວໜ່ວຍເອກະລາດພາຍໃນ 5 ປີ ແລະ ໃຫ້ບໍລິສັດສາຍສົ່ງແຫ່ງຊາດຂອງອາຟຣິກາໃຕ້ເຮັດໜ້າທີ່ເປັນ TSO ໃນໄລຍະຊົ່ວຄາວ; ນອກຈາກນີ້ ຍັງກຳນົດໃຫ້ມີເວທີຕະຫຼາດເປີດ ທີ່ອະນຸຍາດໃຫ້ມີການຊື້-ຂາຍໄຟຟ້າແບບແຂ່ງຂັນກັນ ທັງຂາຍຍົກ ແລະ ຂາຍຍ່ອຍ." ໃນຖະແຫຼງການປະທານາທິບໍດີລະບຸ.

ການເຄື່ອນໄຫວຄັ້ງນີ້ຄາດວ່າຈະຫຼຸດຜ່ອນການຜູກຂາດທີ່ຖືຄອງໂດຍບໍລິສັດໄຟຟ້າຂອງລັດ Eskom ເຊິ່ງຮັບຜິດຊອບຕົ້ນຕໍໃນການສະໜອງໄຟຟ້າໃຫ້ແກ່ປະຊາຊົນແລະອຸດສາຫະກຳຂະໜາດໃຫຍ່; ນອກຈາກນັ້ນ, ມັນຮຽກຮ້ອງໃຫ້ມີການພັດທະນາປະມວນກົດໝາຍການຕະຫຼາດທີ່ຈະສ້າງກົດລະບຽບເພື່ອຄວບຄຸມຕະຫຼາດການແຂ່ງຂັນໃນອະນາຄົດ.

ການລົງນາມໃນຮ່າງກົດໝາຍດັ່ງກ່າວຍັງຈະນຳໄປສູ່ການຂະຫຍາຍລະບົບພະລັງງານຂອງປະເທດໃຫ້ມີຄວາມຫຼາກຫຼາຍ ເຊິ່ງໃນປັດຈຸບັນເພິ່ງພາບັນດາໂຮງງານໄຟຟ້າຖ່ານຫີນເປັນຕົ້ນຕໍ ແລະ ເຮັດໃຫ້ຂະແໜງການນີ້ ມີສະຖຽນລະພາບໃນອະນາຄົດ. ຖະແຫຼງການກ່າວວ່າ "ຄາດວ່າຄວາມຫຼາກຫຼາຍຂອງການສະໜອງ ແລະ ການສົ່ງເສີມການຜະລິດທົດແທນ ຈະກະຕຸ້ນຄວາມຕ້ອງການດ້ານທັກສະ, ນະວັດຕະກຳ ແລະ ເຕັກໂນໂລຊີໃໝ່ໆໃນຂະແໜງໄຟຟ້າ ເຊິ່ງຈະສ້າງກິດຈະກຳອຸດສາຫະກຳໃໝ່ໆ ແລະ ຫຼຸດຜ່ອນການວ່າງງານ."

ເນື່ອງຈາກມີການລັກຂະໂມຍພື້ນຖານໂຄງລ່າງໄຟຟ້າຢ່າງແຜ່ຫຼາຍ ໂດຍສະເພາະທອງແດງ, ຮ່າງກົດໝາຍດັ່ງກ່າວຈະເສີມສ້າງຄວາມປອດໄພດ້ານພື້ນຖານໂຄງລ່າງ. "ການລົງໂທດສຳລັບບຸກຄົນທີ່ຮັບສາຍເຄເບີນ, ອຸປະກອນ ຫຼື ພື້ນຖານໂຄງລ່າງຢ່າງຜິດກົດໝາຍ ຈະປະເຊີນກັບການປັບໃໝເຖິງ 5 ລ້ານແຣນ (1 Rand ປະມານ 1,245 ກີບ) ຫຼື ຈຳຄຸກ 10 ປີ ຫຼືທັງປັບໃໝທັງຈຳຄຸກ." ອີງຕາມຖະແຫຼງການ.

ຖະແຫຼງການໄດ້ກ່າວຕື່ມວ່າ "ໃນອະນາຄົດ, ກົດໝາຍດັ່ງກ່າວຈະນຳໄປສູ່ຄວາມໝັ້ນຄົງດ້ານພະລັງງານໄລຍະຍາວ, ລະບົບພະລັງງານທີ່ມີການແຂ່ງຂັນຫຼາຍຂຶ້ນ, ການນຳໃຊ້ແຫຼ່ງພະລັງງານທົດແທນຢ່າງວ່ອງໄວຍິ່ງຂຶ້ນ, ແລະ ໃນທີ່ສຸດ ລາຄາພະລັງງານສຳລັບຊາວອາຟຣິກາໃຕ້ທຸກຄົນ ກໍຈະຫຼຸດລົງ."

**ແຫຼ່ງຂ່າວ: ຊິນຮວາ**

# ມາລາວີ ນຳເຕັກໂນໂລຊີໃໝ່ ມາໃຊ້ໃນການເລືອກຕັ້ງປີ 2025




ຄະນະກຳມະການການເລືອກຕັ້ງຂອງມາລາວີ (Malawi Electoral Commission - MEC) ໄດ້ນຳອຸປະກອນຄຸ້ມຄອງການເລືອກຕັ້ງ (Electoral Management Devices - EMDs) ມາໃຊ້ເພື່ອປັບປຸງຂະບວນການເລືອກຕັ້ງສຳລັບການເລືອກຕັ້ງທົ່ວໄປຂອງປະເທດທີ່ກຳນົດໄວ້ໃນເດືອນກັນຍາ 2025. ທ່ານ ຊັງວານີ ມະວາຟູລີຣ໌ວາ (Sangwani Mwafulirwa) ໂຄສົກຂອງ MEC ກ່າວເມື່ອວັນພຸດທີ 21 ສິງຫາຜ່ານມາວ່າ ຄະນະກຳມະການການເລືອກຕັ້ງໄດ້ຈັດຊື້ EMDs ທັງໝົດ 6,500 ຊຸດ ຈາກບໍລິສັດ Smartmatic International Holding B V ທີ່ຕັ້ງຢູ່ປະເທດເນເທີແລນ ຫຼື ໂຮນລັງ.

ເຕັກໂນໂລຊີໃໝ່ນີ້ ຈະປ່ຽນແທນລະບົບການລົງທະບຽນຜູ້ມີສິດເລືອກຕັ້ງແບບ Biometric ທີ່ໃຊ້ໃນການເລືອກຕັ້ງທົ່ວໄປປີ 2019 ແລະ ການເລືອກຕັ້ງປະທານາທິບໍດີຮອບໃໝ່ໃນປີ 2020; ຄາດວ່າຄະນະກຳມະການຈະນຳໃຊ້ລະບົບໃໝ່ນີ້ເພື່ອດຳເນີນການລົງທະບຽນຜູ້ມີສິດເລືອກຕັ້ງ, ຄຸ້ມຄອງການຍົກຍ້າຍຜູ້ມີສິດເລືອກຕັ້ງ, ກວດກາທະບຽນຜູ້ມີສິດເລືອກຕັ້ງ.

ທ່ານ ມະວາຟູລີຣ໌ວາ ກ່າວວ່າ ການນຳໃຊ້ EMDs ແມ່ນສ່ວນໜຶ່ງຂອງຍຸດທະສາດຂອງ MEC ເພື່ອຍົກສູງປະສິດທິພາບຂະບວນການເລືອກຕັ້ງໃນລະຫວ່າງການເລືອກຕັ້ງທົ່ວໄປທີ່ຈະມາເຖິງ.

**ແຫຼ່ງຂ່າວ: ຊິນຮວາ**

# ສະພາຕ່ຳ Rwanda ເລືອກຕັ້ງປະທານເພດຍິງ



ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາຜູ້ແທນປະຊາຊົນ ຫຼື ສະພາຕ່ຳ ເມື່ອວັນພຸດທີ 14 ສິງຫາຜ່ານມາ, ທ່ານ ນາງ ເກີທຣູດ ຄາຊາຣ໌ວາ (Gertrude Kazarwa) ສະມາຊິກສະພາຜູ້ແທນປະຊາຊົນ ຈາກພັກເສລີນິຍົມຝ່າຍຄ້ານ ໄດ້ຮັບເລືອກຕັ້ງເປັນປະທານສະພາຜູ້ແທນປະຊາຊົນ ແຫ່ງສາທາລະນະລັດຣະວັນດາ.

ກອງປະຊຸມໄດ້ມີຂຶ້ນຫຼັງຈາກພິທີສາບານຕົນເຂົ້າຮັບຕຳແໜ່ງຂອງສະມາຊິກສະພາຜູ້ແທນປະຊາຊົນ ທີ່ໄດ້ຮັບເລືອກຕັ້ງໃໝ່ ອາຍຸການ 5 ປີ ໃນການເລືອກຕັ້ງສະພານິຕິບັນຍັດເມື່ອວັນທີ 15 ກໍລະກົດຜ່ານມາ, ປະທານາທິບໍດີ ພອນ ຄາກາເມ (Paul Kagame) ເປັນປະທານໃນພິທີສາບານຕົນຢູ່ຕຶກລັດຖະສະພາ ໃນນະຄອນຫຼວງຄິກາລີ (Kigali).

ສະພາຕ່ຳ ເຊິ່ງມີສະມາຊິກ 80 ທ່ານ ທີ່ໄດ້ເຂົ້າຮ່ວມການລົງຄະແນນສຽງ, ທ່ານ ຄາຊາຣ໌ວາ ໄດ້ຮັບຄະແນນ 73 ສຽງ ກາຍເປັນປະທານສະພາຜູ້ແທນປະຊາຊົນຄົນທີ 5 ຫຼັງເຫດການຂ້າລ້າງເຜົ່າພັນໃນຣະວັນດາໂດຍເອົາຊະນະຜູ້ທ້າຊີງພຽງຄົນດຽວຄືທ່ານ ພາຍ ນີເຊຍີມານາ (Pie Nizeyimana) ທີ່ໄດ້ຮັບຄະແນນພຽງ 5 ສຽງ, ອີກສອງຄະແນນຖືກປະກາດວ່າບໍ່ຖືກຕ້ອງ.

ທ່ານ ຄາຊາຣ໌ວາ ອາຍຸ 60 ປີ ກາຍເປັນແມ່ຍິງຄົນທີ 3 ທີ່ດຳລົງຕຳແໜ່ງສູງສຸດໃນລັດຖະສະພາ ຕໍ່ຈາກທ່ານ ນາງ ໂດນາຕີເຢ ມູຄາບາລີຊາ (Donatille Mukabalisa) ແລະ ທ່ານ ນາງ ໂຣສ ມູຄານຕາບານາ (Rose Mukantabana) ທີ່ດຳລົງຕຳແໜ່ງລະຫວ່າງປີ 2013-2024 ແລະ 2008-2013 ຕາມລຳດັບ, ປະທານສະພາຜູ້ໃໝ່ ເຊິ່ງເປັນທະນາຍຄວາມໂດຍການເຝິກອົບຮົມເຄີຍເປັນສະມາຊິກສະພາສູງລະຫວ່າງປີ 2014-2019.

ດ້ວຍສະມາຊິກສະພາເພດຍິງ 51 ທ່ານ, ອັດຕາສ່ວນສະມາຊິກສະພາເພດຍິງໃນສະພາຜູ້ແທນປະຊາຊົນຊຸດໃໝ່ ໄດ້ເພີ່ມຂຶ້ນຈາກ 61% ເປັນ 63.75%, ເຮັດໃຫ້ປະເທດຣະວັນດາ ຍັງຮັກສາອັດຕາສ່ວນມີຜູ້ແທນເພດຍິງໃນລັດຖະສະພາຫຼາຍທີ່ສຸດໃນໂລກ.

ສະພາຜູ້ແທນປະຊາຊົນປະກອບດ້ວຍຜູ້ແທນຈາກບັນດາພັກການເມືອງ 53 ທີ່ນັ່ງ ແລະ ຜູ້ແທນຈາກກຸ່ມພິເສດ 27 ທີ່ນັ່ງ ໃນນີ້ມີຊາວໜຸ່ມ, ແມ່ຍິງ ແລະຄົນພິການ (ເລືອກຕັ້ງໂດຍທາງອ້ອມ).

ນອກຈາກນີ້, ຍັງໄດ້ມີການເລືອກຕັ້ງຮອງປະທານສະພາອີກ 2 ທ່ານຄື: ທ່ານ ມູດຊາ ຟາຊິວ ຮາເຣຣິມານາ (Mussa Fazil Harerimana) ຈາກພັກປະຊາທິປະໄຕໃນອຸດົມຄະຕິ (Ideal Democratic Party) ແລະ ທ່ານ ນາງ ເບລີນ ອູວິເນຊາ (Beline Uwineza) ຈາກແນວໂຮມຮັກຊາດຣະວັນດາ (Rwanda Patriotic Front) ພັກກຳອຳນາດໃນປັດຈຸບັນ.

ທ່ານ ເອັດວາດ ເອັນຈິເຣນເຕ (Edouard Ngirente) ທີ່ໄດ້ຮັບການແຕ່ງຕັ້ງໂດຍປະທານາທິບໍດີ ໃຫ້ດຳລົງຕຳແໜ່ງນາຍົກລັດຖະມົນຕີອີກຄັ້ງເມື່ອວັນທີ 12 ສິງຫາ ກໍໄດ້ເຂົ້າພິທີສາບານຕົນໃນໂອກາດດຽວກັນນີ້ດ້ວຍ. ທ່ານ ເອັນຈິເຣນເຕ ໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງນີ້ຄັ້ງທຳອິດເມື່ອເດືອນສິງຫາ 2017; ກ່ອນທີ່ຈະໄດ້ຮັບການແຕ່ງຕັ້ງເປັນນາຍົກລັດຖະມົນຕີຄັ້ງທຳອິດ, ນັກເສດຖະສາດອາຍຸ 51 ປີ ເຄີຍເຮັດວຽກກັບກຸ່ມທະນາຄານໂລກໃນນະຄອນຫຼວງວໍຊິງຕັນ ດີຊີ, ເປັນທີ່ປຶກສາອາວຸໂສຂອງຜູ້ອຳນວຍການບໍລິຫານ.

**ແຫຼ່ງຂ່າວ: ຊິນຮວາ**

# ກົດໝາຍຊ່ວຍເຫຼືອ, ປ້ອງກັນ ລູກຄ້າ ແລະ ຜູ້ບໍລິໂພກ

ວິເສດ ສະແຫວງສຶກສາ

ໃນປັດຈຸບັນ ຂະບວນການສໍ້ໂກງຕົ້ມຕຸນຊັບທາງອອນລາຍ ໄດ້ແຜ່ລະບາດລາມໄປທົ່ວທີບແບບໄຮ້ພົມແດນ. ໃນຂະນະຂຽນບົດນີ້ຢູ່ນັ້ນ ກໍມີຂ່າວກ່ຽວກັບການເລີກຮື້ກຸ່ມແກ້ງຄອນເຊັນເຕີ (ຫຼອກລວງທາງລະບົບອິນເຕີເນັດ) ຢູ່ເຂດສາມຫຼ່ຽມຄຳ ເມືອງຕົ້ນເຜີ້ງ ແຂວງບໍ່ແກ້ວ. ຖ້າສາວຄືນຫຼັງໄປກວ່ານັ້ນ ກໍຈະພົບກັບຂ່າວເຈົ້າໜ້າທີ່ຝ່າຍລາວໄດ້ຈັດການເນລະເທດບັນດານັກຕົ້ມຕຸນທາງອອນລາຍກັບຄືນໄປຮັບໂທດຢູ່ປະເທດຕົ້ນທາງ.

ສຳລັບເລື່ອງທີ່ຢາກເວົ້າໃຫ້ຟັງໃນບົດນີ້ນັ້ນ ແມ່ນກ່ຽວກັບນະໂຍບາຍດີໆຂອງທາງການປະເທດອິດສະຕຣາລີ ໃນການຊົດເຊີຍຄ່າເສຍຫາຍໃຫ້ແກ່ບຸກຄົນທີ່ຕົກເປັນເຫຍື່ອຂອງພວກຕົ້ມຕຸນທາງອອນລາຍ ແລະ ເລື່ອງທາງການເກາະໄຕ້ຫວັນຂອງ ສປ ຈີນ ເອົາມາດຕະການປົກປ້ອງຜູ້ບໍລິໂພກ ຈາກຜະລິດຕະພັນສິນຄ້າປອມແປງປົນເປື້ອນ. ສຳລັບຢູ່ປະເທດອິດສະຕຣາລີ ນັ້ນ ມີຂ່າວອອກມາໃນຕົ້ນເດືອນສິງຫາປີນີ້ວ່າ ທາງກະຊວງການເງິນພວມກະກຽມຮ່າງກົດໝາຍວ່າດ້ວຍການຊົດເຊີຍຄ່າເສຍຫາຍໃຫ້ລູກຄ້າທະນາຄານທີ່ເສຍເງິນຈາກການຖືກຫຼອກລວງ. ທ່ານ ສະຕີເຟນ ໂຈນ ຜູ້ຊ່ວຍລັດຖະມົນຕີກະຊວງການເງິນ ໄດ້ເວົ້າກ່ຽວກັບຈຸດປະສົງຂອງກົດໝາຍສະບັບນີ້ວ່າ ເພື່ອໃຫ້ທະນາຄານຊ່ວຍເຫຼືອລູກຄ້າທີ່ຖືກຫຼອກລວງໃຫ້ໄດ້ເງິນທີ່ເສຍໄປຄືນ ເພາະວ່າໃນໄລຍະຜ່ານມານັ້ນ ມີຫຼາຍກໍລະນີມີລູກຄ້າບໍ່ໄດ້ຮັບການຊົດເຊີຍເນື່ອງຈາກຖືກຫຼອກລວງໃຫ້ໂອນເງິນຜ່ານທະນາຄານທີ່ພວກຕົນເປັນລູກຄ້າ. ຂ່າວໃຫ້ຮູ້ຕື່ມວ່າ ລັດຖະບານອິດສະຕຣາລີ ໄດ້ຈັດຕັ້ງສູນຕໍ່ຕ້ານການຫຼອກລວງແຫ່ງຊາດ ໃນເດືອນກໍລະກົດ 2023 ເພື່ອປາບປາມກຸ່ມມິດສາຊີບ. ການປາບປາມຜ່ານສູນດັ່ງກ່າວ ໄດ້ຮັບຜົນສຳເລັດພໍສົມຄວນ ແຕ່ທາງທະນາຄານ, ບໍລິສັດໂທລະຄົມມະນາຄົມ ແລະ ໜ່ວຍງານດີຈິຕອນ ຍັງຕ້ອງໄດ້ເພີ່ມທະວີການປ້ອງກັນໃຫ້ໄດ້ດີຍິ່ງຂຶ້ນຕື່ມ. ໃນກົດໝາຍໄດ້ມີການກຳນົດໂທດໃສ່ພາກສ່ວນໂທລະຄົມມະນາຄົມ ແລະ ໜ່ວຍງານດີຈິຕອນທີ່ລະເລີຍບໍ່ເອົາໃຈໃສ່ກວດກາ, ຄວບຄຸມໄວ້ລ່ວງໜ້າ ເຊິ່ງນຳໄປສູ່ຄວາມສ່ຽງໃຫ້ມີຜູ້ຕົກເປັນເຫຍື່ອຂອງການຫຼອກລວງ. ເວົ້າສະເພາະໃນເດືອນເມສາປີນີ້ເດືອນດຽວ ຈຳນວນເງິນທີ່ເສຍໄປຈາກການຖືກຫຼອກລວງນັ້ນ ມີສູງເຖິງ 2.74 ຕື້ໂດລາອິດສະຕຣາລີ. ຜູ້ທີ່ຕົກເປັນເຫຍື່ອຫຼາຍທີ່ສຸດແມ່ນກຸ່ມຄົນເຖົ້າອາຍຸແຕ່ 65 ປີຂຶ້ນໄປ. ສ່ວນວິທີຫຼອກລວງໃຫ້ໂອນເງິນນັ້ນມີຢູ່ 3 ແບບ ຄື: ຫຼອກໃຫ້ຮ່ວມລົງທຶນເພື່ອກຳໄລງາມໆ, ຫຼອກໃຫ້ຫຼົງຮັກ ແລະ ວິທີ 3 ຄືໃຊ້ອຸປະກອນເອເລັກໂຕຣນິກ ບັນຊາທາງໄກ.

ເລື່ອງປິດທ້າຍປະຈຳບົດນີ້ເວົ້າກ່ຽວກັບອາຫານປົນເປື້ອນທີ່ເກີດມາຈາກການປອມແປງແລ້ວນຳເອົາໄປຫຼອກຂາຍ. ຂ່າວນີ້ດັງມາຈາກເກາະໄຕ້ຫວັນຂອງຈີນ ເມື່ອປະມານ 10 ປີຜ່ານມາ (2014) ກ່ຽວກັບການຮັບຮອງ ແລະ ປະກາດໃຊ້ກົດໝາຍທີ່ກຳນົດໂທດຕໍ່ຜູ້ກະທຳຜິດ ດ້ວຍການຕັດອິດສະຫຼະພາບສູງສຸດ 7 ປີ ແລະ ປັບໃໝເປັນເງິນສູງສຸດ 200 ໂດລາໄຕ້ຫວັນ (ໃນເວລານັ້ນ 1 ໂດລາໄຕ້ຫວັນ ມີຄ່າເທົ່າກັບ 266.35 ກີບ).

ນອກຈາກນັ້ນ, ກົດໝາຍຍັງກຳນົດເງິນລາງວັນສູງສຸດ 2.2 ລ້ານໂດລາໄຕ້ຫວັນ ແກ່ຜູ້ທີ່ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບຜູ້ລະເມີດກົດໝາຍ. ໃນທ້າຍປີ 2014 ຢູ່ເກາະໄຕ້ຫວັນ ໄດ້ມີຂະບວນການປອມແປງນ້ຳມັນຄົວກິນຄັ້ງໃຫຍ່ ໂດຍໂຮງງານ ຈາງ ກວນ ທີ່ເອົານ້ຳມັນທີ່ໃຊ້ແລ້ວຫຼາຍເທື່ອ ມາປົນກັບນ້ຳມັນໝູແລ້ວເອົາໄປຈຳໜ່າຍທັງຢູ່ພາຍໃນແລະຕ່າງປະເທດ ໃນກວ່າ 1,000 ແຫ່ງ ສຸດທ້າຍໂຮງງານ ຈາງ ກວນ ກໍຖືກທາງການປິດຕາຍ ພ້ອມທັງປັບໃໝເປັນເງິນສູງເຖິງ 50 ລ້ານໂດລາໄຕ້ຫວັນ. ເຫດການນີ້ລະໄດ້ນຳໄປສູ່ການສ້າງ ແລະ ປະກາດໃຊ້ກົດໝາຍ ປ້ອງກັນຜູ້ບໍລິໂພກຈາກຜະລິດຕະພັນປອມແປງປົນເປື້ອນເປັນອັນຕະລາຍຕໍ່ສຸຂະພາບ.




## ທັມພາສາ ຜ່ານສຽງຫົວ



## ໃບອະນຸຍາດແຕ່ງດອງ

#ບ່າວກະບື

**ເຫຼັກກ້າ:** "ເປັນຫຍັງໂຕຈຶ່ງໄປຫ້ອງການລົງທະບຽນແຕ່ງດອງ, ກະດຽວວ່າໂຕແຕ່ງດອງພໍແຮງແລ້ວ?"

**ດຳດີ:** "ເຮົາຢາກກວດເບິ່ງວ່າ ປານໃດໃບອະນຸຍາດແຕ່ງດອງຂອງເຮົາຊິໝົດອາຍຸ."

## Marriage Licence

#BAOKBU

Lekka: "Why are you going to the marriade registration office? You are already married."

Damdy: "I want to check up when my marriage licence expires."

## ກາຕູນ ທາມພາສາ



ກິນເຂົ້າ ແລ້ວເອົານ້ຳບ້ວນປາກ ຂາດມາລະຍາດ

● ໂດຍ : ພູຜາ

## ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ

ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ **ສະບັບປີ 2015** ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ: laocon@nalao.la

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ